# (ຮ່າງ)

# ດຳລັດວ່າດ້ວຍການຂ້າສັດ ແລະ ການກວດກາອະນາໄມຊີ້ນ

## ໝວດທີ 1 ບົດບັນຍັດທົ່ວໄປ


ມາດຕາ 1 ຈຸດປະສົງ
ມາດຕາ 2 ການຂ້າສັດ ແລະ ການກວດກາອະນາໄມຊີ້ນ
ມາດຕາ 3 ການອະທິບາຍຄຳສັບ
ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ
ມາດຕາ 5 ຫຼັກການ ຄຸ້ມຄອງ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ
ມາດຕາ 6 ຂອບເຂດການນຳໃຊ້


## ໝວດທີ 2 ການຂ້າສັດ


ມາດຕາ 7 ປະເພດຂອງການປະກອບການຂ້າສັດ
ມາດຕາ 8 ຂະໜາດຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ
ມາດຕາ 9 ມາດຕະຖານ ບ່ອນພັກສັດກ່ອນຂ້າຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ
ມາດຕາ 10 ມາດຕະຖານໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ
ມາດຕາ 11 ລະບົບຮັບປະກັນຄວາມປອດໄພທາງດ້ານອາຫານ
ມາດຕາ 12 ການປ້ອງກັນການລະບາດຂອງພະຍາດ
ມາດຕາ 13 ມາດຕະການສຸຂານາໄມບຸກຄົນ
ມາດຕາ 14 ມາດຕະການສຸຂານາໄມຢູ່ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ
ມາດຕາ 15 ການອະນາໄມ, ຂ້າເຊື້ອ, ກຳຈັດສິ່ງເສດເຫຼືອ ແລະ ການບຳບັດນ້ຳເສຍ
ມາດຕາ 16 ຄູ່ມືປະຕິບັດງານ
ມາດຕາ 17 ການບັນທຶກຂໍ້ມູນ
ມາດຕາ 18 ການຮຽກເກັບຜະລິດຕະພັນຄືນ
ມາດຕາ 19 ການຮັບຮອງມາດຕະຖານໂຮງຂ້າສັດ
ມາດຕາ 20 ການຂົນສົ່ງສັດມີຊີວິດເຂົ້າຂ້າ
ມາດຕາ 21 ການແຈ້ງຂໍ້ມູນກ່ຽວກັບສັດທີ່ຈະນຳເຂົ້າຂ້າ
ມາດຕາ 22 ການຮັບ ແລະ ພັກສັດຢູ່ບ່ອນພັກສັດກ່ອນຂ້າ
ມາດຕາ 23 ການຂ້າສັດ
ມາດຕາ 24 ການຄືວສັດ
ມາດຕາ 25 ການຂໍອະນຸຍາດຂ້າສັດຢູ່ນອກໂຮງຂ້າສັດ
ມາດຕາ 26 ການຍົກເວັ້ນການຂໍອະນຸມັດຂ້າສັດ

## ໝວດທີ 3 ການກວດກາອະນາໄມຊີ້ນ

ມາດຕາ 27 ການກວດກາສຸຂະພາບສັດກ່ອນຂ້າ
ມາດຕາ 28 ລັກສະນະຂອງສັດທີ່ເໝາະສົມນຳເຂົ້າຂ້າ
ມາດຕາ 29 ກໍລະນີພົບສັດມີອາການຜິດປົກກະຕິກ່ອນຂ້າ
ມາດຕາ 30 ກໍລະນີພົບສັດຖືພາ ຫຼື ສັດທີ່ສະຫງວນພັນ
ມາດຕາ 31 ກໍລະນີພົບພະຍາດສັດທີ່ຈຳເປັນຕ້ອງແຈ້ງກ່ອນຂ້າ
ມາດຕາ 32 ສັດທີ່ບໍ່ເໝາະສົມສຳລັບນຳເຂົ້າຂ້າ
ມາດຕາ 33 ການກວດກາອະນາໄມຊີ້ນຫຼັງຂ້າ
ມາດຕາ 34 ການຢັ້ງຢືນ ຜົນການກວດກາອະນາໄມຊີ້ນ
ມາດຕາ 35 ກໍລະນີພົບພະຍາດທີ່ຈຳເປັນຕ້ອງແຈ້ງໃນລະຫວ່າງການກວດກາຫຼັງຂ້າ
ມາດຕາ 36 ຊີ້ນສັດທີ່ບໍ່ເໝາະສົມສຳລັບບໍລິໂພກ
ມາດຕາ 37 ຜະລິດຕະພັນສັດ ທີ່ບໍ່ເໝາະສຳລັບບໍລິໂພກ
ມາດຕາ 38 ການທຳລາຍຊາກສັດທີ່ບໍ່ສາມາດບໍລິໂພກ

## ໝວດທີ 4 ການຕັດແຕ່ງຊາກ, ການເກັບຮັກສາ ແລະ ຈຳໜ່າຍຊີ້ນ ແລະ ຜະລິດຕະພັນສັດ

ມາດຕາ 39 ການຕັດແຕ່ງຊາກ ແລະ ແຍກຊີ້ນ
ມາດຕາ 40 ການນຳໃຊ້ຊາກອຸ່ນ
ມາດຕາ 41 ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນສັດ
ມາດຕາ 42 ການຫຸ້ມຫໍ່ຜະລິດຕະພັນສັດ
ມາດຕາ 43 ການຕິດສະຫລາກຜະລິດຕະພັນສັດ
ມາດຕາ 44 ການຂົນສົ່ງຊີ້ນ
ມາດຕາ 45 ການຈຳໜ່າຍຊີ້ນ ຫຼື ຜະລິດຕະພັນສັດ
ມາດຕາ 46 ການຈຳໜ່າຍຊີ້ນ ແລະ ຜະລິດຕະພັນສັດ ທີ່ຕາຍຍ້ອນອຸປະຕິເຫດ
ມາດຕາ 47 ການຈັດປະເພດ ຄຸນນະພາບຊີ້ນສັດ

## ໝວດທີ 5 ການດຳເນີນທຸລະກິດກ່ຽວກັບການຂ້າສັດ

ມາດຕາ 48 ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ
ມາດຕາ 49 ບົດວິພາກເສດຖະກິດ-ເຕັກນິກ
ມາດຕາ 50 ການປະກອບເອກະສານ
ມາດຕາ 51 ການອະນຸມັດໃຫ້ລົງມືກໍ່ສ້າງ
ມາດຕາ 52 ການກວດກາຄວາມຄືບໜ້າຂອງການກໍ່ສ້າງ
ມາດຕາ 53 ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ
ມາດຕາ 54 ການນຳໃຊ້ໃບອະນຸຍາດ
ມາດຕາ 55 ອາຍຸຂອງໃບອະນຸຍາດ

ມາດຕາ 56 ໃບອະນຸຍາດເສຍຫາຍ ຫຼື ຖືກທຳລາຍ
ມາດຕາ 57 ການໂຈະ ຫຼື ຖອນໃບອະນຸຍາດ
ມາດຕາ 58 ການຍ້າຍສະຖານທີ່, ການຢຸດເຊົາ, ການໂອນກິດຈະການ
ມາດຕາ 59 ການເກັບຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ

**ໝວດທີ 6 ໜ້າທີ່ ຂອງພະນັກງານກວດກາອະນາໄມຊີ້ນ, ຜູ້ໄດ້ຮັບອະນຸຍາດ ແລະ ຜູ້ດຳເນີນການຂ້າສັດ**
ມາດຕາ 60 ພະນັກງານກວດກາອະນາໄມຊີ້ນ
ມາດຕາ 61 ໜ້າທີ່ຂອງຜູ້ໄດ້ຮັບອະນຸຍາດ
ມາດຕາ 62 ໜ້າທີ່ຂອງຜູ້ປະຕິບັດການຂ້າສັດ

**ໝວດທີ 7 ຂໍ້ຫ້າມ**
ມາດຕາ 63 ຂໍ້ຫ້າມທົ່ວໄປ
ມາດຕາ 64 ຂໍ້ຫ້າມສຳລັບຜູ້ປະກອບການ
ມາດຕາ 65 ຂໍ້ຫ້າມສຳລັບພະນັກງານ ແລະ ພະນັກງານກວດກາອະນາໄມຊີ້ນ

**ໝວດທີ 8 ການຄຸ້ມຄອງ ແລະ ກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ**
ມາດຕາ 66 ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ
ມາດຕາ 67 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກະຊວງກະສິກຳ ແລະ ປ່າໄມ້
ມາດຕາ 68 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ
ມາດຕາ 69 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
ມາດຕາ 70 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ
ມາດຕາ 71 ຄະນະກຳມະການກວດກາຕິດຕາມການດຳເນີນທຸລະກິດກ່ຽວກັບການຂ້າສັດ
ມາດຕາ 72 ໜ້າທີ່ຄວາມຮັບຜິດຊອບ ຂອງຄະນະກຳມະການກວດກາຕິດຕາມການດຳເນີນທຸລະກິດກ່ຽວກັບການຂ້າສັດ

**ໝວດທີ 9 ການກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ**
ມາດຕາ 73 ອົງການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ
ມາດຕາ 74 ສິດ ແລະ ໜ້າທີ່ ຂອງອົງການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ
ມາດຕາ 75 ຮູບການກວດກາ

**ໝວດທີ 10 ເຄື່ອງແບບ, ເຄື່ອງໝາຍ ແລະ ກາຈ້ຳຊີ້ນ**
ມາດຕາ 76 ເຄື່ອງແບບ ແລະ ເຄື່ອງໝາຍ ຂອງພະນັກງານກວດກາອະນາໄມຊີ້ນ
ມາດຕາ 77 ກາຈ້ຳຊີ້ນ

**ໝວດທີ 11 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

ມາດຕາ 78 ນະໂຍບາຍຕໍ່ຜູ້ມີຜົນງານ

ມາດຕາ 79 ມາດຕະການຕໍ່ຜູ້ລະເມີດ

ມາດຕາ 80 ມາດຕະການສຶກສາອົບຮົມ

ມາດຕາ 81 ມາດຕະການທາງວິໄນ

ມາດຕາ 82 ມາດຕະການປັບໃໝ

ມາດຕາ 83 ມາດຕະການທາງແພ່ງ

ມາດຕາ 84 ມາດຕະການທາງອາຍາ

**ໝວດທີ 12 ບົດບັນຍັດສຸດທ້າຍ**

ມາດຕາ 85 ການຈັດຕັ້ງປະຕິບັດ

ມາດຕາ 86 ຜົນສັກສິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ............/ລບ

ນະຄອນຫຼວງວຽງຈັນ, ວັນທີ.......................

(ຮ່າງ)

# ດຳລັດ
# ວ່າດ້ວຍການຂ້າສັດ ແລະ ການກວດກາອະນາໄມຊີ້ນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ............./ກປ, ລົງວັນທີ............... .

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ, ການກວດກາ ການເຄື່ອນໄຫວວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອໃຫ້ໄດ້ຜະລິດຕະພັນສັດ ທີ່ມີຄຸນນະພາບ, ປອດໄພ, ເໝາະສົມສຳລັບການບໍລິໂພກ, ແນໃສ່ປົກປ້ອງ, ສົ່ງເສີມສຸຂະພາບຂອງຄົນ, ສັດ ແລະ ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ປະກອບສ່ວນໃນການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມທິດກະສິກຳສີຂຽວ, ສະອາດ ແລະ ຍືນຍົງ.

**ມາດຕາ 2 ການຂ້າສັດ ແລະ ການກວດກາອະນາໄມຊີ້ນ**

ການຂ້າສັດ ແມ່ນ ຂະບວນການເຮັດໃຫ້ສັດຕາຍແບບບໍ່ທໍລະມານ ຊຶ່ງກວມເອົາ ຕັ້ງແຕ່ ຂອດກະກຽມສ້າງຕັ້ງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ, ການຂົນສົ່ງສັດເຂົ້າໂຮງຂ້າ, ການຂ້າ ແລະ ຄົວສັດເພື່ອໃຫ້ໄດ້ຊາກສັດທີ່ສະອາດ, ປອດໄພ ເໝາະສົມສຳລັບການບໍລິໂພກ.

ການກວດກາອະນາໄມຊີ້ນ ແມ່ນຂັ້ນຕອນການກວດກາ ດ້ານວິຊາການສັດຕະວະແພດ ຂອງພະນັກງານກວດກາອະນາໄມຊີ້ນ ທີ່ໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການຈາກ ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຊຶ່ງກວມເອົາ ການກວດກາຄວາມສະອາດໂຮງຂ້າສັດ, ການກວດສຸຂະພາບສັດກ່ອນຂ້າ, ການກວດກາອະນາໄມຊີ້ນຫຼັງຂ້າສັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ມີ ຄວາມໝາຍ ດັ່ງນີ້:

1. **ສັດ** ໝາຍເຖິງ ງົວ, ຄວາຍ, ໝູ, ແກະ, ແບ້, ສັດປີກ ແລະ ສັດອື່ນ ຕາມທີ່ອົງການຄຸ້ມຄອງ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນກຳນົດ;

2. **ໂຮງຂ້າສັດ** ໝາຍເຖິງ ສະຖານທີ່ ແລະ ອາຄານທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການ ກ່ຽວກັບການຂ້າສັດ ໂດຍມີການກໍ່ສ້າງຕາມມາດຕະຖານເຕັກນິກ ທີ່ປະກອບດ້ວຍ ເຄື່ອງມື ແລະ ອຸປະກອນ ເພື່ອອຳນວຍຄວາມສະດວກ ສຳລັບການ ຂ້າ, ຄົວສັດ ແລະ ການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ທີ່ປອດໄພສຳລັບການບໍລິໂພກ ຊຶ່ງໄດ້ຮັບອະນຸຍາດໂດຍຖືກຕ້ອງຕາມກົດໝາຍ;

3. **ບ່ອນຂ້າສັດຍ່ອຍ** ໝາຍເຖິງ ບ່ອນທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການຂ້າສັດທີ່ມີຈຳນວນຈຳກັດ;

4. **ບ່ອນພັກສັດກ່ອນຂ້າ** ໝາຍເຖິງ ສະຖານທີ່ກັກຂັງສັດກ່ອນນຳເຂົ້າຂ້າ ທີ່ກໍ່ສ້າງຂຶ້ນຢູ່ໃກ້ກັບໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;

5. **ສະຫຼົບ** ໝາຍເຖິງ ອາການໝົດຄວາມຮູ້ສຶກ ຂອງສັດທີ່ນຳເຂົ້າຂ້າ;

6. **ຊີ້ນ** ໝາຍເຖິງ ຊີ້ນສົດ ແລະ ພາກສ່ວນຕ່າງໆຂອງສັດທີ່ກິນໄດ້ ຊຶ່ງໄດ້ຜ່ານການກວດກາ ຮັບຮອງວ່າປອດໄພ ແລະ ເໝາະສົມສຳລັບການບໍລິໂພກ;

7. **ຊີ້ນສົດ** ໝາຍເຖິງ ຊີ້ນສັດ ລວມທັງ ເຄື່ອງໃນ ທີ່ຍັງບໍ່ທັນໄດ້ຜ່ານຂະບວນການປຸງແຕ່ງ ຫຼື ຖະໜອມອາຫານ ຍົກເວັ້ນການແຊ່ເຢັນ ແລະ ການບັນຈຸໃນພາຊະນະບັນຈຸທີ່ສາມາດຄົງສະພາບຂອງຊີ້ນຕາມທຳມະຊາດຂອງມັນ;

8. **ຊາກ** ໝາຍເຖິງ ພາກສ່ວນໝົດຮ່າງກາຍສັດ ທີ່ໄດ້ເອົາເລືອດ, ຂົນ ຫຼື ໜັງ, ຫົວ, ຕີນ, ຫາງ ແລະ ເຄື່ອງໃນອອກແລ້ວ ຊຶ່ງເໝາະສົມສຳລັບນຳໄປບໍລິໂພກ;

9. **ເຄື່ອງໃນ** ໝາຍເຖິງ ອະໄວຍະວະພາຍໃນ ຂອງສັດ ເປັນຕົ້ນ ຕັບ, ໄຕ, ໄຂ່ຫຼັງ, ຫົວໃຈ, ປອດ, ມ້າມ, ຫຼອດລົມ, ທໍ່ອາຫານ, ກະເພາະ, ລຳໄສ້, ອະໄວຍະວະສືບພັນ;

10. **ຜະລິດຕະພັນສັດ** ໝາຍເຖິງ ຜົນຜະລິດ ທີ່ໄດ້ມາຈາກອະໄວຍະວະຂອງສັດ ເປັນຕົ້ນ ຊາກສັດໝົດໂຕ, ຊາກສັດຜ່າເຄິ່ງ, ຊີ້ນ, ນົມ, ໄຂ່, ໜັງ, ເຂົາ, ກະດູກ, ເລືອດ, ເຄື່ອງໃນ, ໄຂມັນ, ຂົນ, ເລັບ, ນ້ຳເຊື້ອ, ຕົວອ່ອນ, ຈຸລັງໄຂ່;

11. **ຜະລິດຕະພັນສຳຮອງຈາກສັດ** ໝາຍເຖິງ ຊີ້ນສ່ວນໃດໜຶ່ງຂອງສັດ ຊຶ່ງບໍ່ສາມາດນຳມາປຸງແຕ່ງເປັນອາຫານ ເປັນຕົ້ນ ເຂົາ, ກະດູກ, ຂົນ, ເລັບ ລວມທັງ ຜະລິດຕະພັນສັດຂັ້ນຕົ້ນ ທີ່ບໍ່ເໝາະສົມສຳລັບການບໍລິໂພກ ຊຶ່ງອະນຸຍາດໃຫ້ນຳໃຊ້ໃນຈຸດປະສົງອື່ນ;

12. **ຜູ້ໄດ້ຮັບອະນຸຍາດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດການອະນາໄມຊີ້ນ ອອກອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບການຂ້າສັດ;

13. **ເຂດເປື້ອນ** ໝາຍເຖິງ ເຂດ ຫຼື ສະຖານທີ່ ເລີ່ມແຕ່ເສັ້ນທາງພາຍໃນໂຮງຂ້າສັດ ທີ່ເປັນບ່ອນໃຫ້ພາຫະນະຂົນສັດລົງ ຈົນຮອດບ່ອນເຈາະເອົາເລືອດອອກ;

14. **ເຂດສະອາດ** ໝາຍເຖິງ ເຂດ ຫຼື ສະຖານທີ່ ທີ່ເປັນບ່ອນຕັດແຕ່ງຊີ້ນ, ແຍກປະເພດ, ຫຸ້ມຫໍ່, ຕິດສະຫຼາກ, ຫ້ອງເຢັນເກັບຮັກສາຜະລິດຕະພັນສຸດທ້າຍຈົນຮອດ ບ່ອນສົ່ງຜະລິດຕະພັນຂຶ້ນລົດຂົນສົ່ງຜະລິດຕະພັນສັດ;

15. **ລະບົບການຜະລິດທີ່ດີ** ໝາຍເຖິງ ລະບົບ ທີ່ສ້າງຂຶ້ນ ເພື່ອໃຫ້ເປັນມາດຕະຖານປະຕິບັດ ແນໃສ່ຮັບປະກັນຄຸນນະພາບຂອງຜະລິດຕະພັນ ໃຫ້ໄດ້ຕາມມາດຕະຖານຄວາມປອດໄພທາງດ້ານອາຫານ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ແລະ ອົງການທີ່ກ່ຽວຂ້ອງກໍານົດ;

16. **ຄວາມປອດໄພທາງດ້ານອາຫານ** ໝາຍເຖິງ ການປະຕິບັດງານ ເພື່ອປ້ອງກັນ ອາການເຈັບປ່ວຍ ທີ່ມາຈາກການບໍລິໂພກອາຫານ;

17. **ສັດຢູ່ໃນໄລຍະທີ່ນໍາໃຊ້ເປັນແນວພັນ** ໝາຍເຖິງ ສັດແນວພັນດີ ທີ່ ກະຊວງກະສິກໍາ ແລະ ປ່າໄມ້ ໄດ້ຂຶ້ນທະບຽນໄວ້ໃຫ້ເປັນ ພໍ່ພັນ, ແມ່ພັນ ທີ່ຍັງສາມາດໃຫ້ຜົນຜະລິດ ຫຼື ເປັນສັດສະຫງວນພັນ;

18. **ການກວດກາສຸຂະພາບສັດກ່ອນຂ້າ** ໝາຍເຖິງ ການກວດກາ ຂອງພະນັກງານກວດກາອະນາໄມຊີ້ນ ຢູ່ບ່ອນພັກສັດກ່ອນຂ້າ ດ້ວຍການກວດກາເອກະສານ, ການສັງເກດເບິ່ງລັກສະນະພາຍນອກ, ການເຄື່ອນໄຫວ, ວັດແທກອຸນຫະພູມ ແລະ ຈັງຫວະການຫາຍໃຈ, ສໍາພັດ, ຟັງ, ລວມທັງການເກັບຕົວຢ່າງເພື່ອນໍາໄປວິໄຈ ເພື່ອຮັບປະກັນ ໃຫ້ໄດ້ສັດທີ່ມີສຸຂະພາບສົມບູນແຂງແຮງ ເໝາະສໍາລັບນໍາເຂົ້າຂ້າ ເພື່ອການບໍລິໂພກ;

19. **ການກວດກາອະນາໄມຊີ້ນຫຼັງຂ້າ** ໝາຍເຖິງ ຂະບວນການກວດກາດ້ານເຕັກນິກ ຂອງພະນັກງານກວດກາອະນາໄມຊີ້ນ ຊຶ່ງລວມເອົາການກວດຜົນຂອງການກວດກາກ່ອນຂ້າ, ການສັງເກດເບິ່ງສະພາບ ແລະ ຮ່ອງຮອຍ, ການສໍາພັດ, ດົມກິ່ນ, ການປາດອະໄວຍະວະຢູ່ຕາມຊາກ ແລະ ເຄື່ອງໃນສັດ ລວມທັງການເກັບຕົວຢ່າງຫຼັງການຂ້າສັດ ແລະ ຄົວເຄື່ອງໃນແລ້ວ ເພື່ອຢັ້ງຢືນເຖິງຄວາມປອດໄພ ແລະ ຄວາມເໝາະສົມສໍາລັບການບໍລິໂພກຂອງຊີ້ນ ແລະ ຜະລິດຕະພັນສັດ;

20. **ສານເລັ່ງຊີ້ນແດງ** ໝາຍເຖິງ ສານໃນກຸ່ມເບຕາອາໂກນິສ ເປັນຢາປິ່ນປົວໃນຄົນ ຊຶ່ງຜູ້ລ້ຽງສັດນໍາເອົາມາປະສົມລົງໃນອາຫານສັດ ເພື່ອຈຸດປະສົງເຮັດໃຫ້ສັດມີການສະສົມໄຂມັນຫຼຸດລົງ, ເລັ່ງການຈະເລີນເຕີບໂຕ ແລະ ໄດ້ຊີ້ນແດງເພີ່ມຂຶ້ນ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການດໍາເນີນວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ໄດ້ມາດຕະຖານເຕັກນິກ ດ້ວຍການວາງນະໂຍບາຍທີ່ເໝາະສົມ ເພື່ອອໍານວຍຄວາມສະດວກໃຫ້ແກ່ຜູ້ລົງທຶນທັງພາຍໃນ, ຕ່າງປະເທດ ແລະ ອົງການທີ່ກ່ຽວຂ້ອງສາມາດດໍາເນີນກິດຈະການ ຢ່າງມີຄຸນນະພາບ, ປອດໄພ, ມາດຕະຖານ, ປະສິດທິຜົນ, ຍືນຍົງ, ບໍ່ສ້າງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

## ມາດຕາ 5 ຫຼັກການ ຄຸ້ມຄອງ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

ການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຕ້ອງປະຕິບັດຕາມ ຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງ ກັບ ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

2. ຮັບປະກັນ ດ້ານ ຄວາມສະອາດ ແລະ ປອດໄພ ຕໍ່ສຸຂະພາບຄົນ, ສັດ, ບໍ່ສ້າງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ;

3. ເປັນເອກະພາບ,ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດກາໄດ້;

4. ຮັບປະກັນ ບໍ່ສ້າງສິ່ງກີດຂວາງທີ່ບໍ່ຈຳເປັນ ຕໍ່ການຄ້າ ແລະ ບໍ່ເລືອກປະຕິບັດ ລະຫວ່າງຜະລິດຕະພັນຢູ່ພາຍໃນກັບຕ່າງປະເທດ ຫຼື ລະຫວ່າງປະເທດສະມາຊິກທີ່ມີເງື່ອນໄຂຄືກັນ ຫຼື ຄ້າຍຄືກັນ;

5. ສອດຄ່ອງກັບມາດຕະຖານດ້ານເຕັກນິກ, ຄຳແນະນຳ ແລະ ມາດຕະການທີ່ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງກຳນົດ;

6. ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບການລ້ຽງສັດ, ການຂ້າ, ການກວດກາອະນາໄມຊີ້ນ ແລະ ການປຸງແຕ່ງເປັນຜະລິດຕະພັນສັດຂັ້ນຕົ້ນ ຈົນເຖິງຈຸດວາງຈຳໜ່າຍ.

## ໝວດທີ 2
## ການຂ້າສັດ

**ມາດຕາ 7 ປະເພດຂອງການປະກອບການຂ້າສັດ**

ການປະກອບການຂ້າສັດ ຂອງ ສປປ ລາວ ແບ່ງເປັນ 4 ປະເພດດັ່ງນີ້:

**ປະເພດ 1.** ແມ່ນການຂ້າສັດ ຂອງສະຖານທີ່ປະກອບການໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຊຶ່ງມີການປະກອບເຄື່ອງມື ແລະ ອຸປະກອນທີ່ທັນສະໄໝ ທີ່ຂ້າສັດເພື່ອສະໜອງຕະຫລາດ ພາຍໃນ ແລະ ສົ່ງອອກຕ່າງປະເທດ;

**ປະເພດ 2.** ແມ່ນ ການຂ້າສັດຂອງສະຖານທີ່ປະກອບການຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຊຶ່ງມີການປະກອບເຄື່ອງມື ແລະ ອຸປະກອນ ເຄິ່ງທັນໄໝ ທີ່ຂ້າສັດເພື່ອສະໜອງຕະຫຼາດພາຍໃນປະເທດເທົ່ານັ້ນ;

**ປະເພດ 3.** ແມ່ນ ການຂ້າສັດຂອງສະຖານປະກອບການ ເປັນບ່ອນຂ້າສັດຍ່ອຍ ຊຶ່ງມີການປະກອບເຄື່ອງມື ແລະ ອຸປະກອນ ຂັ້ນພື້ນຖານຕາມມາດຕະຖານ ທີ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນກຳນົດ ແລະ ໄດ້ຮັບອະນຸຍາດໃຫ້ເປັນບ່ອນຂ້າສັດສະເພາະ ເພື່ອຮັບໃຊ້ເຂດໃດໜຶ່ງທີ່ບໍ່ມີໂຮງຂ້າສັດ ເປັນຕົ້ນບ້ານ, ກຸ່ມບ້ານ;

**ປະເພດ 4.** ແມ່ນ ການຂ້າສັດ ຢູ່ນອກໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍທີ່ໄດ້ຮັບອະນຸຍາດເປັນການສະເພາະຂອງອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຢູ່ໃນເຂດທີ່ບໍ່ມີໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ.

**ມາດຕາ 8 ຂະໜາດຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ຂະໜາດຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ແມ່ນແບ່ງຕາມຄວາມອາດສາມາດຂອງການຂ້າສັດຕໍ່ວັນ ໂດຍກຳນົດອອກ ເປັນ ສີ່ ຂະໜາດ ດັ່ງນີ້:

1. ບ່ອນຂ້າສັດຍ່ອຍ ສໍາລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ແມ່ນ ລວມກັນບໍ່ເກີນຊາວ (20) ໂຕ ຕໍ່ວັນ ຫຼື ຂ້າສັດປີກ ບໍ່ເກີນ ໜຶ່ງຮ້ອຍ (100) ໂຕ ຕໍ່ວັນ;

2. ໂຮງຂ້າສັດຂະໜາດນ້ອຍ ສໍາລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຕັ້ງແຕ່ຊາວເອັດ (21) ໂຕ ຫາ ຫົກສິບ (60) ໂຕຕໍ່ວັນ ຫຼື ຂ້າສັດປີກຕັ້ງແຕ່ ໜຶ່ງຮ້ອຍໜຶ່ງ (101) ໂຕຫາຫ້າຮ້ອຍ (500) ໂຕຕໍ່ວັນ;

3. ໂຮງຂ້າສັດຂະໜາດກາງ ສໍາລັບຂ້າສັດປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຕັ້ງແຕ່ຫົກສິບເອັດ (61) ໂຕ ຫາ ໜຶ່ງຮ້ອຍຊາວ (120) ໂຕຕໍ່ວັນ ຫຼື ຂ້າສັດປີກຕັ້ງແຕ່ ຫ້າຮ້ອຍໜຶ່ງ (501) ໂຕຫາສອງພັນຫ້າຮ້ອຍ (2.500) ໂຕຕໍ່ວັນ;

4. ໂຮງຂ້າສັດຂະໜາດໃຫຍ່ ສໍາລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຕັ້ງແຕ່ ໜຶ່ງຮ້ອຍຊາວເອັດ (121) ໂຕຕໍ່ວັນຂຶ້ນໄປ ຫຼື ຂ້າສັດສັດປີກ ເກີນກວ່າສອງພັນຫ້າຮ້ອຍ (2.500) ໂຕຕໍ່ວັນ ຂຶ້ນໄປ.

ໂດຍການອອກແບບໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ໃຫ້ປະຕິບັດຕາມ ຄໍາແນະນໍາຂອງກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 9 ມາດຕະຖານ ບ່ອນພັກສັດກ່ອນຂ້າຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ບ່ອນພັກສັດກ່ອນຂ້າຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງປະຕິບັດຕາມຄູ່ມືແນະນໍາຂອງກົມລ້ຽງສັດ ແລະ ການປະມົງ ຊຶ່ງໂດຍພື້ນຖານຕ້ອງໃຫ້ມາດຕະຖານ ດັ່ງນີ້:

1. ບ່ອນພັກສັດກ່ອນຂ້າ ຕ້ອງຕັ້ງຢູ່ເຂດເປື້ອນຂອງອາຄານໂຮງຂ້າສັດ;

2. ໂຄງສ້າງຄອກສັດ ຕ້ອງເຮັດດ້ວຍວັດຖຸແຂງແຮງທົນທານ, ມີຫຼັງຄາຄຸມເຖິງທາງບັງຄັບສັດ, ມີປະຕູ ແລະ ຮົ້ວກັ້ນທີ່ແຂງແຮງ, ມີບໍລິເວນຮັບສັດທີ່ເໝາະສົມ ແລະ ມີທາງຍ່າງບັງຄັບສັດ;

3. ບໍລິເວນຄອກສັດ ຕ້ອງມີພື້ນທີ່ພຽງພໍສໍາລັບພັກສັດ ແລະ ກວດກາສຸຂະພາບສັດກ່ອນຂ້າ;

4. ມີສະຖານທີ່ແຍກສັດເຈັບປ່ວຍ,

5. ມີລະບົບນໍ້າ ແລະ ອຸປະກອນໃຫ້ນໍ້າດື່ມທີ່ສະອາດ ແລະ ຮັບປະກັນ, ມີນໍ້າລ້າງຮ່າງກາຍສັດ ແລະ ຄອກສັດທີ່ສະອາດ, ມີອ່າງລ້າງ ແລະ ຂ້າເຊື້ອເກີບ;

5. ມີລະບົບລະບາຍນໍ້າເສຍທີ່ບໍ່ປົນກັບຮ່ອງລະບາຍນໍ້າຝົນ ແລະ ທິດທາງການລະບາຍນໍ້າລ້າງຄອກສັດທີ່ສົງໄສເຈັບປ່ວຍຕ້ອງບໍ່ໃຫ້ໄຫລໄປຫາຄອກພັກສັດ;

6. ມີສິ່ງອໍານວຍຄວາມສະດວກຕ່າງໆຢ່າງພຽງພໍ ເປັນຕົ້ນ ລະບົບລະບາຍອາກາດ, ລະບົບໃຫ້ແສງສະຫວ່າງ ແລະ ມີສະຖານທີ່ຈັດເກັບຂີ້ສັດ ແລະ ສິ່ງເສດເຫຼືອຢ່າງມີປະສິດທິພາບ;

7. ບ່ອນພັກສັດກ່ອນຂ້າ ຕ້ອງມີລະບົບບໍລິຫານ-ຈັດການ ຕາມທີ່ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້ກໍານົດ.

**ມາດຕາ 10 ມາດຕະຖານໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີມາດຕະຖານ ແລະ ເງື່ອນໄຂພື້ນຖານ ດັ່ງນີ້:

1. ຕ້ອງຕັ້ງຢູ່ສະຖານທີ່ ທີ່ນໍ້າບໍ່ຖ້ວມເຖິງ, ມີເສັ້ນທາງຄົມມະນາຄົມສະດວກ, ມີລະບົບສາທາລະນູປະໂພກ ແລະ ພື້ນທີ່ພຽງພໍ, ບໍ່ກໍ່ໃຫ້ເກີດອັນຕະລາຍ ຫຼື ສ້າງຜົນກະທົບຕໍ່ສັງຄົມ ແລະ ສະພາບແວດລ້ອມ ແລະ ໃຫ້ຫຼີກເວັ້ນຕັ້ງຢູ່ໃນ ຫຼື ຢູ່ໃກ້ກັບວັດ, ໂບດ, ໂຮງໝໍ, ສຸກສາລາ, ຫໍພັກ, ສະຖານທີ່ລັດຖະການ, ໂຮງຮຽນສາມັນ ຢ່າງໜ້ອຍ 500 ແມັດ ແລະ ຕ້ອງບໍ່ຂັດກັບກົດໝາຍ, ລະບຽບການກ່ຽວກັບຜັງເມືອງ;

2. ບໍລິເວນພາຍນອກອາຄານໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີຮົ້ວກັ້ນ, ເປັນລະບຽບຮຽບຮ້ອຍ, ບໍ່ມີຝຸ່ນຕົມ, ລະບາຍນໍ້າໄດ້ດີ, ມີບ່ອນພັກສັດກ່ອນນໍາເຂົ້າຂ້າ, ແຍກທາງເຂົ້າອອກຂອງສັດມີຊີວິດ ແລະ ຊີ້ນສັດອອກຈາກກັນ, ມີລະບົບປ້ອງກັນສັດທີ່ເປັນພາຫະນໍາເຊື້ອພະຍາດ ແລະ ມີບ່ອນເກັບສິ່ງເສດເຫຼືອ;

3. ໂຕອາຄານພາຍນອກ ຕ້ອງໝັ້ນຄົງ, ແຂງແຮງ, ທໍາຄວາມສະອາດໄດ້ງ່າຍ, ມີພື້ນທີ່ພຽງພໍສໍາລັບປະຕິບັດງານ, ມີການກັ້ນແຍກເຂດສະອາດອອກຈາກເຂດເປື້ອນ, ມີການອອກແບບວາງຜັງສະຖານທີ່ຜະລິດ ແລະ ເຄື່ອງມື, ເຄື່ອງຈັກ ແລະ ອຸປະກອນຕ່າງໆ ຢ່າງເປັນລະບົບຕາມຂະບວນການຜະລິດທີ່ເອື້ອອໍານວຍໃຫ້ແກ່ການຜະລິດສະອາດ, ຖືກຕາມຫຼັກສຸຂານາໄມ, ສາມາດປ້ອງກັນຝຸ່ນລະອອງ ຈາກສະພາບແວດລ້ອມເຂົ້າໄປໃນໂຮງງານ ແລະ ມີຫຼັງຄາທີ່ໝັ້ນຄົງແຂງແຮງ;

4. ສະພາບພາຍໃນຂອງອາຄານ: ພື້ນຕ້ອງເປັນພື້ວລຽບກັນນໍ້າໄດ້, ແຂງແຮງ, ທົນທານ, ທໍາຄວາມສະອາດໄດ້ງ່າຍ, ມີຄວາມລາດອຽງພຽງພໍທີ່ຈະລະບາຍນໍ້າອອກໄປສູ່ທໍ່ລະບາຍໄດ້ດີ, ຮອຍຕໍ່ລະຫວ່າງພື້ນກັບຝາຕ້ອງແຈບດີ ເປັນມຸມໂຄ້ງ, ຝາດ້ານໃນຕ້ອງມີພື້ວລຽບ, ແຂງແຮງ, ທົນທານ, ບໍ່ເປັນໝ້ຽງ, ເຂດທີ່ມີເພດານຮອຍຕໍ່ເພດານຕ້ອງແຈບດີ ເປັນມຸມໂຄ້ງທໍາຄວາມສະອາດໄດ້ງ່າຍ, ເພດານເປັນພື້ວລຽບກັນນໍ້າໄດ້, ບໍ່ເປັນຂີ້ໝ້ຽງ, ແຈບດີ ແລະ ທໍາຄວາມສະອາດໄດ້ງ່າຍ, ມີຄວາມສູງບໍ່ຕໍ່າກວ່າ ສາມແມັດ, ວົງກົບຕ້ອງແຂງແຮງທົນທານມີພື້ວລຽບ, ບໍ່ເປັນໝ້ຽງ, ກັນນໍ້າໄດ້ ແລະ ສາມາດອະນາໄມທໍາຄວາມສະອາດໄດ້ງ່າຍ, ປະຕູຕ້ອງເປັນພື້ວລຽບ, ອັດແຈບດີ ບໍ່ມີຮອຍພື່ວ ແລະ ປະຕູຢູ່ບ່ອນເປີດຈາກຫ້ອງຜະລິດ ຕ້ອງປິດເປີດແບບອັດຕະໂນມັດ;

5. ບໍລິເວນພາຍໃນຫ້ອງຂ້າສັດ ຄວນມີອົງປະກອບຕົ້ນຕໍ ຕາມທີ່ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ ເປັນຕົ້ນ ບໍລິເວນຂ້າສັດ ແລະ ເອົາເລືອດອອກ, ບ່ອນລອກໜັງ ຫຼື ລວກ ຫຼື ເອົາຂົນອອກ, ບ່ອນລ້າງຊາກກ່ອນເອົາເຄື່ອງໃນອອກ, ບ່ອນເອົາເຄື່ອງໃນອອກ, ບ່ອນຄົ້ວ ແລະ ທໍາຄວາມສະອາດເຄື່ອງໃນ, ບ່ອນລ້າງຊາກ, ບ່ອນແຍກ ແລະ ຕັດແຕ່ງຊີ້ນ, ບ່ອນບັນຈຸ, ຫ້ອງແຊ່ເຢັນ ຫຼື ແຊ່ແຂງ, ບ່ອນຮັບສິ່ງຊາກສັດ ແລະ ຊີ້ນສັດ, ບ່ອນລ້າງ ແລະ ເກັບມ້ຽນເຄື່ອງມື ແລະ ອຸປະກອນ, ມີລະບົບລະບາຍອາກາດ, ລະບົບໃຫ້ແສງສະຫວ່າງ, ລະບົບນໍ້າໃຊ້, ສິ່ງອໍານວຍຄວາມສະດວກໃຫ້ແກ່ຄົນງານ (ຫ້ອງສຸຂາ, ບ່ອນປ່ຽນເສື້ອຜ້າ, ຫ້ອງອາບນໍ້າ), ມີອ່າງລ້າງມື ແລະ ຫ້ອງເຮັດວຽກຂອງພະນັກງານກວດກາອະນາໄມຊີ້ນ;

6. ເຄື່ອງມື, ເຄື່ອງຈັກ ແລະ ອຸປະກອນ ຕ້ອງເຮັດດ້ວຍວັດຖຸ ແລະ ເຄືອບສີ ທີ່ບໍ່ມີຄວາມສ່ຽງເຮັດໃຫ້ເກີດເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ, ສານລໍ່ລື່ນ ຕ້ອງປ້ອງກັນບໍ່ໃຫ້ຮົ່ວຊຶມອອກມາຕິດໃສ່ຊາກ ຫຼື ຜະລິດຕະພັນຊີ້ນ ແລະ ຕ້ອງເປັນສານທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ, ການຕິດຕັ້ງເຄື່ອງມື, ເຄື່ອງຈັກ ແລະ ອຸປະກອນຖາວອນ ຕ້ອງຕັ້ງໃຫ້ຫ່າງຈາກຝາ ແລະ ເພດານຢ່າງໜ້ອຍ ສາມສິບຊັງຕີແມັດ;

7. ມີລະບົບຄວບຄຸມ ແລະ ກໍາຈັດແມງວັນ, ນົກ, ໜູ, ສັດມີພິດຢູ່ບໍລິເວນອາຄານຂ້າສັດ ແລະ ບ່ອນພັກສັດກ່ອນຂ້າ;

8. ມີສະຖານທີ່ເກັບສານເຄມີ ທີ່ປອດໄພຫ່າງຈາກບໍລິເວນຜະລິດ ແລະ ມີການຕິດປ້າຍ ແລະ ສະຫລາກໃຫ້ຊັດເຈນ;

9. ມີບ່ອນເກັບມ້ຽນຂີ້ເຫຍື້ອ ແລະ ສິ່ງເສດເຫຼືອທີ່ຮັບປະກັນ;

10. ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດຢ່າງພຽງພໍ ໂດຍຕ້ອງມີການຈັດຝຶກອົບຮົມກ່ຽວກັບການຄຸ້ມຄອງໂຮງຂ້າສັດ, ການປະຕິບັດງານຂ້າສັດ, ການອະນາໄມ ແລະ ຂ້າເຊື້ອ ສ່ວນຕົວ, ໂຮງຂ້າສັດ ແລະ ການຈັດການດ້ານສິ່ງແວດລ້ອມເປັນຢ່າງດີ;

11. ມີພະນັກງານກວດກາອະນາໄມຊີ້ນ ທີ່ມີຄວາມຮູ້ຄວາມສາມາດກວດສຸຂະພາບສັດກ່ອນຂ້າ ແລະ ກວດຊີ້ນຫຼັງຂ້າ ປະຈຳຢູ່ໂຮງຂ້າສັດ;

12. ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີ ຊິງຊັ່ງນ້ຳໜັກ, ເຄື່ອງວັດແທກອຸ່ນຫະພູມ ຫຼື ເຄື່ອງວັດແທກອື່ນ ທີ່ຖືກຕ້ອງຕາມມາດຕະຖານ, ເໝາະກັບການໃຊ້ງານ, ມີຄູ່ມືນຳໃຊ້ ແລະ ມີແຜນກວດສອບຄວາມຖືກຕ້ອງທີ່ຊັດເຈນ ແລະ ສະໝ່ຳສະເໝີ;

13. ມີລະບົບບຳບັດນ້ຳເສຍ ທີ່ຕັ້ງຢູ່ຫ່າງຈາກອາຄານຜະລິດຂອງໂຮງຂ້າສັດ ແລະ ບ່ອນພັກສັດກ່ອນຂ້າ ໂດຍຮັບປະກັນບຳບັດນ້ຳເສຍຢ່າງມີປະສິດທິພາບ ຊຶ່ງນ້ຳທີ່ຜ່ານການບຳບັດແລ້ວ ຕ້ອງຢູ່ໃນເກນມາດຕະຖານຕາມກົດໝາຍ ທີ່ສາມາດອະນຸຍາດໃຫ້ປ່ອຍລົງຮ່ອງລະບາຍນ້ຳ ສາທາລະນະໄດ້;

14. ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີນ້ຳຢ່າງພຽງພໍ ທັງນ້ຳຮ້ອນ ແລະ ນ້ຳເຢັນ. ນ້ຳໃຊ້, ນ້ຳກ້ອນທີ່ໃຊ້ລ້າງຜະລິດຕະພັນ ຕ້ອງມີຄຸນນະພາບເທົ່າກັບນ້ຳປະປາ ຫຼື ເປັນນ້ຳທີ່ໄດ້ຜ່ານການວິໄຈ ແລະ ຢັ້ງຢືນວ່າສະອາດປອດໄພເທົ່າກັບນ້ຳດື່ມ, ນ້ຳຮ້ອນຕ້ອງມີອຸນຫະພູມບໍ່ໃຫ້ຫຼຸດ 82 ອົງສາເຊ. ນ້ຳໃຊ້ສຳລັບລ້າງໂຮງເຮືອນຂ້າສັດ, ບ່ອນພັກສັດ ແລະ ລ້າງຮ່າງກາຍສັດ ຕ້ອງແມ່ນນ້ຳປະປາ ຫຼື ນ້ຳສ້າງ ຫຼື ນ້ຳບາດານ ຫຼື ແມ່ນນ້ຳຈາກແຫຼ່ງນ້ຳທີ່ໃສ, ບໍ່ມີກິ່ນເໝັນ ແລະ ບໍ່ປົນເປື້ອນດ້ວຍເຊື້ອພະຍາດ ຫຼື ສານທີ່ເປັນອັນຕະລາຍທີ່ໄດ້ຜ່ານການກວດສອບຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ ວ່າ ບໍ່ໃຫ້ມີຜົນກະທົບຕໍ່ສຸຂະພາບຂອງສັດ ແລະ ຜູ້ບໍລິໂພກ;

15. ໂຮງຂ້າສັດທີ່ມີສາງເຢັນ, ຫ້ອງເຢັນຕ້ອງໃຫ້ສາມາດຄວບຄຸມອຸນຫະພູມຊາກສັດໄດ້ ໂດຍໃຫ້ອຸນຫະພູມຂອງຈຸດໃຈກາງຂອງຊາກມີອຸນຫະພູມຢູ່ລະຫວ່າງ 4-10 ອົງສາເຊ;

16. ມີລະບົບປ້ອງກັນອັກຄີໄພ ແລະ ທາງອອກສຸກເສີນຢ່າງໜ້ອຍ 1 ບ່ອນ;

17. ສຳລັບໂຮງຂ້າສັດ ຕ້ອງມີຫ້ອງການບໍລິຫານ;

18. ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີລະບົບບໍລິຫານ-ຈັດການ ຕາມທີ່ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ກຳນົດ.

**ມາດຕາ 11 ລະບົບຮັບປະກັນຄວາມປອດໄພທາງດ້ານອາຫານ**

ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ຕ້ອງມີລະບົບຮັບປະກັນຄວາມປອດໄພທາງດ້ານອາຫານ ເປັນຕົ້ນ ລະບົບການລ້ຽງສັດທີ່ດີ ຫຼື Good Animal Husbandry Practice – GAHP ໃນຂອດການລ້ຽງ ແລະ ຂົນສົ່ງສັດມີຊີວິດ, ມີລະບົບການຜະລິດຜະລິດທີ່ດີ ຫຼື Good Manufacturing Practices – GMP ຊຶ່ງເປັນລະບຽບໃນການເຮັດວຽກທີ່ຮັບປະກັນເພື່ອເຮັດໃຫ້ການຜະລິດ, ປຸງແຕ່ງ ແລະ ເກັບຮັກສາຜະລິດຕະພັນສັດ ທີ່ມີຄຸນນະພາບຢ່າງສະເໝີຕົ້ນສະເໝີປາຍ. ລະບົບການສຸຂາພິບານທີ່ດີ ຫຼື Good Sanitation Standard Operating Procedure – SSOP ໂດຍຕ້ອງມີແຜນ ແລະ ຈັດການບັນທຶກ ການປະຕິບັດໃນ

ທຸກຂັ້ນຕອນຂອງການອະນາໄມທຳຄວາມສະອາດບໍລິເວນທີ່ຈະສຳພັດ ແລະ ບໍ່ສຳພັດກັບຜະລິດຕະພັນສັດ ເພື່ອຮັບປະກັນ ປ້ອງກັນບໍ່ໃຫ້ເກີດການປົນເປື້ອນ.

ຜູ້ໄດ້ຮັບອະນຸຍາດ ເພື່ອການສົ່ງອອກ ຍັງຈະຕ້ອງໄດ້ປະຕິບັດແຜນງານຄວບຄຸມຈຸດວິກິດທີ່ເປັນອັນຕະລາຍ ຫຼື Hazard Analysis Critical Control Point-HACCP ຢ່າງເຄັ່ງຄັດຕື່ມອີກ.

ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງມີລະບົບ ໃນການຕິດຕາມ, ທົບທວນ ແລະ ໃຫ້ການຢັ້ງຢືນ ເພື່ອຄວບຄຸມມາດຕະຖານການປະຕິບັດລະບົບຮັບປະກັນຄວາມປອດໄພທາງດ້ານອາຫານ ຢູ່ແຕ່ລະຕ່ອງໂສ້ຂອງການຜະລິດສັດ ໃຫ້ສອດຄ່ອງກັບ ຄຳແນະນຳຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ.

## ມາດຕາ 12 ການປ້ອງກັນການລະບາດຂອງພະຍາດ

ຜູ້ໄດ້ຮັບອະນຸຍາດ ຕ້ອງຮັບຜິດຊອບປ້ອງກັນການລະບາດຂອງພະຍາດ ດັ່ງນີ້:

1. ສ້າງລະບົບປ້ອງກັນ, ຄວບຄຸມພະຍາດ ແລະ ຮັບປະກັນຄວາມປອດໄພ;

2. ນອກຈາກສັດທີ່ຈະນຳມາຂ້າ, ຫ້າມນຳເອົາສັດ ຫຼື ຊີ້ນສັດຈາກແຫຼ່ງອື່ນເຂົ້າໄປໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍໂດຍເດັດຂາດ;

3. ຕ້ອງລ້າງ ແລະ ຂ້າເຊື້ອລົດບັນທຸກສັດ ທຸກຄັ້ງທີ່ນຳສັດລົງຈາກພາຫານະ ແລະ ນຳໄປລ້າງໃນບໍລິເວນລ້າງພາຫະນະເປັນການສະເພາະເທົ່ານັ້ນ;

4. ສັດທີ່ນຳເຂົ້າຂ້າ ຕ້ອງເປັນສັດທີ່ມີສຸຂະພາບດີທີ່ມາຈາກແຫຼ່ງປອດພະຍາດທີ່ເຊື່ອຖືໄດ້;

5. ມີລະບົບດັກ, ກຳຈັດ ສັດທີ່ເປັນພາຫະຂອງພະຍາດ ເປັນຕົ້ນ ແມງໄມ້, ນົກ, ໜູ ແລະ ສັດມີພິດທັງພາຍໃນ ແລະ ບໍລິເວນຮອບນອກໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;

6. ກໍລະນີຈຳເປັນ ຕ້ອງໄດ້ນຳໃຊ້ຢາຂ້າແມງໄມ້ ຕ້ອງໃຊ້ຢ່າງປອດໄພ, ລະມັດລະວັງບໍ່ໃຫ້ປົນເປື້ອນກັບຊີ້ນ ແລະ ຜະລິດຕະພັນສັດ ໂດຍຕ້ອງນຳໃຊ້ຕາມ ການແນະນຳຂອງຜູ້ຜະລິດຢ່າງເຄັ່ງຄັດ. ກ່ອນໃຊ້ຢາຂ້າແມງໄມ້ຕ້ອງເອົາຊາກສັດ ຫຼື ຊີ້ນສັດອອກຈາກສະຖານທີ່ນັ້ນກ່ອນ, ເຄື່ອງມືເຄື່ອງໃຊ້ຕ້ອງເອົາຜ້າຢາງປົກ ແລະ ກ່ອນຈະນຳເອົາເຄື່ອງມືມາໃຊ້ຕ້ອງລ້າງໃຫ້ສະອາດເສຍກ່ອນ;

7. ຈັດໃຫ້ມີການກວດກາສຸຂະພາບສັດກ່ອນຂ້າ ໂດຍພະນັກງານກວດກາອະນາໄມຊີ້ນ ພາຍໃນເວລາຊາວສີ່ຊົ່ວໂມງ ກ່ອນມີການຂ້າສັດ, ໃນກໍລະນີເກີດຈຳເປັນ ບໍ່ສາມາດຂ້າສັດໃນຊາວສີ່ຊົ່ວໂມງໄດ້ ຕ້ອງກວດກາຊໍ້າຄືນອີກຈຶ່ງນຳສັດເຂົ້າ;

8. ໃນກໍລະນີສົງໄສ ຫຼື ເກີດພະຍາດທີ່ຈຳເປັນຕ້ອງແຈ້ງ ເກີດຂຶ້ນຢູ່ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຫຼື ບ່ອນພັກສັດກ່ອນຂ້າ ໃຫ້ຜູ້ໄດ້ຮັບອະນຸຍາດ ແຈ້ງຕໍ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນຊາບ ເພື່ອທຳການທຳລາຍ ແລະ ດຳເນີນມາດຕະການຄວບຄຸມ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ;

## ມາດຕາ 13 ມາດຕະການສຸຂານາໄມບຸກຄົນ

ຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດມາດຕະການ ສຸຂານາໄມບຸກຄົນ ດັ່ງນີ້:

1. ຄົນງານ ນັບທັງພະນັກງານສັດຕະວະແພດ, ພະນັກງານກວດກາອະນາໄມຊີ້ນ ກ່ອນຮັບເຂົ້າເຮັດວຽກຕ້ອງຜ່ານການກວດສຸຂະພາບເສຍກ່ອນ ແລະ ຕ້ອງມີການກວດສຸຂະພາບເປັນປະຈຳທຸກໆ ສິບສອງເດືອນ;

2. ບໍ່ອະນຸຍາດ ໃຫ້ບຸກຄົນ ທີ່ເປັນພະຍາດວັນນະໂລກ, ຕັບອັກເສບຕິດຕໍ່, ພະຍາດທາງເດີນຫາຍໃຈ ຫຼື ເປັນພະຍາດຜີວໜັງຊ້ຳເຮື້ອ ເຂົ້າເຮັດວຽກຢູ່ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;

3. ຜູ້ທີ່ເຈັບປ່ວຍ, ເປັນໄຂ້, ຖອກທ້ອງ, ເປັນຫວັດ, ພະຍາດຕາແດງ ຕ້ອງໄດ້ປິ່ນປົວໃຫ້ຫາຍດີເປັນປົກກະຕິແລ້ວ ຈຶ່ງໃຫ້ມາເຮັດວຽກ;

4. ຖ້າມີບາດແຜຢູ່ມື ຕ້ອງຕິດແຜດ້ວຍຜ້າພັນບາດ ແລະ ໃຫ້ສວມຖົງມືເສຍກ່ອນ ຈຶ່ງໃຫ້ເຂົ້າເຮັດວຽກຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;

5. ຕ້ອງມີປຶດລາຍງານການກວດສຸຂະພາບ ແລະ ມີການບັນທຶກປະຫວັດການເຈັບປ່ວຍຂອງຄົນງານ ທີ່ສາມາດກວດສອບໄດ້ທຸກເວລາ;

6. ຄົນງານທຸກຄົນຕ້ອງຕັດເລັບມືໃຫ້ສັ້ນຢູ່ສະເໝີ ຫ້າມໃສ່ເຄື່ອງປະດັບໃດໆໃສ່ມື ຫຼື ນີ້ວມື;

7. ກ່ອນເຂົ້າຫ້ອງປະຕິບັດງານ ທຸກຄົນຕ້ອງນຸ່ງເຄື່ອງກັນເປື້ອນ, ໃສ່ຖົງມື, ໃສ່ໝວກ, ໃສ່ຜ້າອັດປາກ, ໃສ່ເກີບໂບກ ທີ່ໄດ້ຜ່ານການ ຂ້າເຊື້ອແລ້ວ,ຖົງມືທີ່ໃຊ້ຕ້ອງຢູ່ສະພາບທີ່ດີບໍ່ຮົ່ວ ຫຼື ຊີກຂາດ ແລະ ກ່ອນທີ່ຈະໃສ່ຖົງມືຕ້ອງລ້າງມືໃຫ້ສະອາດເສຍກ່ອນ;

8. ບຸກຄົນທີ່ຈະເຂົ້າໄປໃນອາຄານໂຮງຂ້າສັດ ຕ້ອງລ້າງມືດ້ວຍສະບູໃຫ້ສະອາດ ແລະ ທາຢາຂ້າເຊື້ອທຸກຄັ້ງ ຫລັງຈາກເຂົ້າຫ້ອງນ້ຳ. ຖ້າມີການຈັບຕ້ອງຊີ້ນສັດທີ່ເປັນພະຍາດ ຈະຕ້ອງຮີບລ້າງມື ແລະ ຂ້າເຊື້ອໂດຍທັນທີ;

9. ພະນັກງານ ແລະ ກຳມະກອນ ຕ້ອງບໍ່ນຳເອົາຊັບສິນສ່ວນຕົວ ແລະ ອາຫານ ມາເກັບໄວ້ໃນຫ້ອງຂ້າ, ຄົວ, ຕັດແຕ່ງ ແລະ ຫ້ອງເກັບມ້ຽນຊີ້ນສັດໂດຍເດັດຂາດ;

10. ເສື້ອຄຸມ, ເຄື່ອງມື, ເຄື່ອງໃຊ້ອື່ນ ຈະຕ້ອງນຳໄປເກັບໄວ້ໃນຫ້ອງສະເພາະ ຫຼັງຈາກທີ່ທຳຄວາມສະອາດ ແລະ ຂ້າເຊື້ອຢ່າງດີແລ້ວ;

11. ພະນັກງານ ແລະ ກຳມະກອນ ຕ້ອງບໍ່ສູບຢາ, ຖົ່ມນ້ຳລາຍ, ກິນອາຫານຢູ່ພາຍໃນຫ້ອງປະຕິບັດງານ;

12. ແຂກມາຢ້ຽມຢາມໂຮງຂ້າສັດ ກໍ່ຕ້ອງປະຕິບັດຄືກັນກັບຜູ້ປະຕິບັດງານ.

**ມາດຕາ 14 ມາດຕະການສຸຂານາໄມຢູ່ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດມາດຕະການສຸຂານາໄມ ໃນການປະຕິບັດງານຢູ່ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ດັ່ງນີ້:

1. ອະນາໄມທຳຄວາມສະອາດເປັນປະຈຳ ທຸກວັນທັງກ່ອນ ແລະ ຫຼັງການຂ້າສັດ;

2. ອະນາໄມ ທຳຄວາມສະອາດ ແລະ ຂ້າເຊື້ອ ເຄື່ອງມື, ອຸປະກອນ, ໂຕະ, ເລື່ອຍ, ພາຊະນະບັນຈຸ, ແລະ ເຄື່ອງໃຊ້ຕ່າງໆພາຍໃນໂຮງຂ້າສັດລະຫວ່າງການຂ້າສັດ ແລະ ຫຼັງການຂ້າສັດ. ໃນກໍລະນີທີ່ມີການໃຊ້ສິ່ງຂອງດັ່ງກ່າວກັບສັດເຈັບປ່ວຍທີ່ເປັນພະຍາດ ຕ້ອງທຳຄວາມສະອາດ ແລະ ຂ້າເຊື້ອທັນທີ;

3. ອະນາໄມທຳຄວາມສະອາດພາຫານະທຸກຄັ້ງ ທີ່ໃຊ້ບັນທຸກຊີ້ນສັດ ຫຼື ຊາກສັດ ທັງກ່ອນ ແລະ ຫຼັງການບັນທຸກ;

4. ສານເຄມີທີ່ໃຊ້ທຳຄວາມສະອາດ ຫຼື ຂ້າເຊື້ອ ແລະ ຢາປາບສັດຕູພືດ ຕ້ອງເປັນຊະນິດທີ່ກົດໝາຍ ອະນຸຍາດໃຫ້ນຳໃຊ້ຢູ່ໃນໂຮງຂ້າສັດ ແລະ ຕ້ອງລະມັດລະວັງບໍ່ໃຫ້ປົນເປື້ອນກັບຊີ້ນສັດ;

5. ມີສະຖານທີ່ເກັບສານເຄມີທີ່ຢູ່ຫ່າງຈາກຫ້ອງຜະລິດ ແລະ ສະຖານທີ່ເກັບຮັກສາຊີ້ນສັດ ໂດຍມີການແຍກຊະນິດ ຫຼື ປະເພດສານເຄມີ ແລະ ມີການຕິດສະຫລາກໃຫ້ຊັດເຈນ;

6. ມີການມ້ຽນມັດ, ກຳຈັດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອທີ່ເໝາະສົມ ແລະ ຖືກຫຼັກອະນາໄມ;

7. ມີການປ່ຽນເສື້ອຜ້າ, ອາບນໍ້າ ແລະ ໃຊ້ຫ້ອງສຸຂາ ທີ່ສະອາດ;

8. ມີການຈັດການກັບຊາກສັດທີ່ບໍ່ເໝາະສົມ ສໍາລັບບໍລິໂພກຢ່າງເໝາະສົມ;

9. ມີປ້າຍເຕືອນ ແລະ ປ້າຍຫ້າມ ໃສ່ຈຸດທີ່ເປັນອັນຕະລາຍ.

## ມາດຕາ 15 ການອະນາໄມ, ຂ້າເຊື້ອ, ກໍາຈັດສິ່ງເສດເຫຼືອ ແລະ ການບໍາບັດນໍ້າເສຍ

ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ ຕ້ອງວາງແຜນ ທໍາຄວາມສະອາດ ແລະ ຂ້າເຊື້ອພະຍາດ ດັ່ງນີ້:

1. ຕ້ອງໃຫ້ມີການສ້າງແຜນຕາຕະລາງ ຫຼື ຂໍ້ແນະນໍາ ສໍາລັບການທໍາຄວາມສະອາດ ແລະ ຂ້າເຊື້ອອາຄານ, ສະຖານທີ່, ເຄື່ອງມື, ເຄື່ອງໃຊ້, ພາຫະນະ, ຖັງ, ກະຕ່າ, ໄມ້ຖູພື້ນ, ຜ້າຖູພື້ນ ແລະ ອື່ນໆຢ່າງເປັນລາຍລັກອັກສອນ;

2. ຕ້ອງມີການແຕ່ງຕັ້ງບຸກຄົນ ຮັບຜິດຊອບການກວດສອບຄວາມສະອາດຕ່າງຫາກ;

3. ການລ້າງທໍາຄວາມສະອາດ ຕ້ອງເຮັດໃຫ້ຖືກວິທີ ໂດຍຕ້ອງ ຂັດຖູ, ລ້າງດ້ວຍນໍ້າສະອາດ ຫຼື ໃຊ້ນໍ້າສີດທີ່ມີຄວາມດັນເໝາະສົມ ແລ້ວ ຈຶ່ງຜົ່ນດ້ວຍນໍ້າສະບູ່ ຫຼື ມີການລ້າງດ້ວຍນໍ້າຮ້ອນ;

4. ພາຍຫຼັງການລ້າງທໍາຄວາມສະອາດແລ້ວ ຕ້ອງມີການຂ້າເຊື້ອ ດ້ວຍນໍ້າຢາຂ້າເຊື້ອ ມີປະສິດທິພາບ, ເໝາະສົມກັບໂຮງຂ້າສັດ, ບໍ່ທໍາລາຍວັດຖຸປະກອນ ແລະ ມີຄວາມປອດໄພ;

5. ການໃຊ້ນໍ້າຢາຂ້າເຊື້ອ ຄວນໃຊ້ສະເພາະ ໃນກໍລະນີທີ່ບໍ່ມີລະບົບຂ້າເຊື້ອດ້ວຍຄວາມຮ້ອນເທົ່ານັ້ນ;

6. ການຂ້າເຊື້ອດ້ວຍຄວາມຮ້ອນ, ນໍ້າຮ້ອນຕ້ອງມີອຸນຫະພູມ 80 ອົງສາເຊ ແລະ ຕ້ອງໃຊ້ເວລາຂ້າເຊື້ອຢ່າງໜ້ອຍ 2 ນາທີ;

7. ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ ແລະ ບ່ອນພັກສັດກ່ອນຂ້າ ຕ້ອງມີສະຖານທີ່ຈັດເກັບຂອງເສຍ, ມີເຄື່ອງມືອຸປະກອນ ແລະ ມີການຕິດປ້າຍເຕືອນ ທີ່ແນ່ນອນຊັດເຈນ, ຂອງເສຍຂອງໂຮງຂ້າສັດ ຕ້ອງຖືກກໍາຈັດ ແລະ ທໍາລາຍດ້ວຍວິທີທີ່ຮັບປະກັນ ໂດຍບໍ່ໃຫ້ເກີດການປົນເປື້ອນຄືນໃສ່ຜະລິດຕະພັນທີ່ບໍລິໂພກໄດ້.

## ມາດຕາ 16 ຄູ່ມືປະຕິບັດງານ

ຜູ້ໄດ້ຮັບອະນຸຍາດ ຕ້ອງສ້າງຄູ່ມືປະຕິບັດງານໃນທຸກຂັ້ນຕອນຂອງຕົນ ຕາມການແນະນໍາ ແລະ ກວດກາ ໂດຍອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ.

## ມາດຕາ 17 ການບັນທຶກຂໍ້ມູນ

ຜູ້ໄດ້ຮັບອະນຸຍາດດໍາເນີນທຸລະກິດກ່ຽວກັບ ການຂ້າສັດ ຕ້ອງສ້າງລະບົບບັນທຶກ, ຄຸ້ມຄອງ ແລະ ເກັບຮັກສາເອກະສານໄວ້ຢ່າງປອດໄພ, ມີການເຂົ້າເຖິງຂໍ້ມູນ, ສະຫຼຸບ, ລາຍງານ ແລະ ສະໜອງຂ່າວສານ ກ່ຽວກັບການບໍລິຫານຈັດການ ການຜະລິດ ແລະ ບໍລິການ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາຢ່າງເປັນປົກກະຕິ.

## ມາດຕາ 18 ການຮຽກເກັບຜະລິດຕະພັນຄືນ

ໃນກໍລະນີທີ່ມີການພົບຊີ້ນ ຫຼື ຜະລິດຕະພັນສັດ ທີ່ບໍ່ປອດໄພ ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ຕາມແຕ່ລະກໍລະນີ ອອກຄໍາສັ່ງເປັນລາຍລັກອັກສອນ ສັ່ງໃຫ້ ຜູ້ໄດ້ຮັບອະນຸຍາດຢຸດຕິການຈໍາໜ່າຍ, ດໍາເນີນມາດຕະການເກັບຄືນ ພ້ອມທັງ ໃຫ້ແນະນໍາກ່ຽວກັບ ວິທີການກໍາຈັດ, ທໍາລາຍ ແລະ

ແຕ່ງຕັ້ງ ຄະນະວິຊາການ ເພື່ອຮັບຜິດຊອບໃນການຕິດຕາມ, ກວດກາ ແລະ ລາຍງານ ໃຫ້ແກ່ອົງການຄຸ້ມຄອງທີ່ກ່ຽວຂ້ອງຊາບຢ່າງທັນການ.

**ມາດຕາ 19 ການຮັບຮອງມາດຕະຖານໂຮງຂ້າສັດ**

ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ຕ້ອງພັດທະນາ ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ແລະ ການປະຕິບັດງານຂອງຕົນໃຫ້ໄດ້ມາດຕະຖານ. ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ອອກມາດຕະຖານ ແລະ ພັດທະນາລະບົບ ແລະ ວິທີການກວດກາ ຮັບຮອງມາດຕະຖານຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ເພື່ອຍົກລະດັບໃຫ້ບັນລຸມາດຕະຖານຂອງຂົງເຂດ, ສາກົນ ຫຼື ມາດຕະຖານທີ່ປະເທດຄູ່ຄ້າສາມາດຍອມຮັບໄດ້.

**ມາດຕາ 20 ການຂົນສົ່ງສັດມີຊີວິດເຂົ້າຂ້າ**

ການຂົນສົ່ງສັດມີຊີວິດ ເພື່ອນຳມາຂ້າຢູ່ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງຄຳນຶງເຖິງຫຼັກການສະຫວັດດີການສັດທີ່ດີ ໂດຍໃຫ້ປະຕິບັດ ຕາມມາດຕະການຕົ້ນຕໍ ດັ່ງນີ້:

1. ພາຫະນະຂົນສົ່ງ ຕ້ອງອອກແບບເປັນພາຫະນະຂົນສົ່ງສັດເປັນການສະເພາະ ໂດຍມີຂະໜາດເໝາະສົມກັບຊະນິດ ແລະ ຈຳນວນສັດ, ອາກາດສາມາດໄຫຼວຽນສະດວກ ແລະ ບໍ່ມີຄວາມສ່ຽງທີ່ຈະເຮັດໃຫ້ສັດເກີດບາດເຈັບ, ທໍລະມານ ຫຼື ປົນເປື້ອນໃນລະຫວ່າງທີ່ມີການຂົນສົ່ງ, ຖ້າມີຄວາມຈຳເປັນ ຄວນມີຫຼັງຄາ, ພື້ນ ແລະ ຝາຂອງພາຫະນະ ຕ້ອງແຂງແຮງ, ທົນທານ ແລະ ພື້ນຕ້ອງບໍ່ມື່ນ ແລະ ສາມາດປ້ອງກັນບໍ່ໃຫ້ມີສິ່ງເສດເຫຼືອຕົກເຮ່ຍອອກຈາກພາຫະນະ ແລະ ພາຫະນະ ຕ້ອງສາມາດທຳການອະນາໄມ ແລະ ຂ້າເຊື້ອໄດ້;

2. ກ່ອນການຂົນສົ່ງ ຕ້ອງມີການກວດກາ ແລະ ເລືອກເອົາສັດທີ່ມີສຸຂະພາບສົມບູນແຂງແຮງ ທີ່ເໝາະສົມສຳລັບນຳເຂົ້າຂ້າເພື່ອບໍລິໂພກເທົ່ານັ້ນ, ໂດຍສັດຕະວະແພດປະຈຳຟາມ ຕ້ອງກວດກາ ແລະ ອອກໃບຢັ້ງຢືນສຸຂະພາບ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ກຳກັບໄປນຳການຂົນສົ່ງ;

3. ສັດທີ່ຈະມີການຂົນສົ່ງນຳໄປຂ້າ ຕ້ອງຖືກງົດອາຫານ ຢູ່ໃນໄລຍະເວລາທີ່ເໝາະສົມ ໂດຍປົກກະຕິແມ່ນ 12-18 ຊົ່ວໂມງ. ໄລຍະເວລາງົດອາຫານໃຫ້ນັບເອົາຕັ້ງແຕ່ ໄລຍະເວລາງົດອາຫານກ່ອນການຂົນສົ່ງ, ລະຫວ່າງການຂົນສົ່ງ ແລະ ໄລຍະເວລາພັກສັດ ຢູ່ບ່ອນພັກສັດກ່ອນຂອງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;

4. ການເອົາສັດຂຶ້ນ ຫຼື ລົງພາຫະນະ ຕ້ອງດຳເນີນຢູ່ສະຖານທີ່ສຳລັບເອົາສັດຂຶ້ນລົງເປັນການສະເພາະ ແລະ ຕ້ອງປະຕິບັດດ້ວຍຄວາມລະມັດລະວັງ, ບໍ່ເຮັດໃຫ້ສັດເກີດຄວາມຢ້ານກົວ, ຕື່ນຕົກໃຈ, ດີ້ນກະວົນກະວາຍຈົນເຮັດໃຫ້ສັດເກີດການເຈັບປວດ ຫຼື ທໍລະມານ;

5. ກໍລະນີທີ່ມີການນຳໃຊ້ອຸປະກອນໄຟຟ້າ ໄລ່ສັດຂຶ້ນ ຫຼື ລົງພາຫະນະ ຕ້ອງໃຊ້ກຳລັງໄຟຟ້າທີ່ເໝາະສົມກັບສັດແຕ່ລະຊະນິດ;

6. ການບັນທຸກສັດ ຕ້ອງບໍ່ໃຫ້ແອອັດເກີນໄປ, ຄວນເຮັດເປັນຄອກ ແລະ ໃຫ້ມີສິ່ງປູຮອງພາຫະນະທີ່ເໝາະສົມ;

7. ທຸກຄັ້ງທີ່ຈະມີການຂົນສົ່ງສັດ ຄົນຂັບລົດ ຕ້ອງກວດສະພາບຂອງສັດ, ເລກທະບຽນພິມສັດ, ເອກະສານທີ່ກ່ຽວຂ້ອງ ແລະ ໃຫ້ຄວາມຮ່ວມມືໃຫ້ແກ່ ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃນການແຈ້ງເອກະສານ ຫຼື ການກວດກາດ້ານວິຊາການ ຕາມລະບຽບການທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ;

8. ພາຫະນະຂົນທີ່ໃຊ້ຂົນສົ່ງສັດ ຕ້ອງອະນາໄມ ຂ້າເຊື້ອພະຍາດ ດ້ວຍຢາຂ້າເຊື້ອທີ່ກົມລ້ຽງສັດ ແລະ ການປະມົງ ແນະນຳ ທຸກຄັ້ງ ທັງກ່ອນ ແລະ ຫຼັງການຂົນສົ່ງ.

**ມາດຕາ 21 ການແຈ້ງຂໍ້ມູນກ່ຽວກັບສັດທີ່ຈະນຳເຂົ້າຂ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຈະສົ່ງສັດເຂົ້າຂ້າເພື່ອຈຳໜ່າຍ ຕ້ອງໄດ້ແຈ້ງຂໍ້ມູນກ່ຽວກັບສັດທີ່ຈະນຳເຂົ້າຂ້າ ລວມທັງ ການລາຍງານກ່ຽວກັບການນຳໃຊ້ຢາສັດຕະວະແພດ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງກຳນົດ ຕໍ່ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ຮັບຜິດຊອບກ່ຽວກັບການຂ້າສັດ ແລະ ກວດກາອະນາໄມຊີ້ນ.

**ມາດຕາ 22 ການຮັບ ແລະ ພັກສັດຢູ່ບ່ອນພັກສັດກ່ອນຂ້າ**

ການຮັບ ແລະ ພັກສັດຢູ່ບ່ອນພັກສັດກ່ອນຂ້າ ໃຫ້ປະຕິບັດດັ່ງນີ້:

1. ນຳພາຫະນະຂົນສົ່ງສັດ ຜ່ານອ່າງຂ້າເຊື້ອຕີນລົດ;

2. ນຳສັດລົງຈາກພາຫະນະ ໂດຍຕ້ອງໄລ່ຕ້ອນສັດດ້ວຍຄວາມນິ້ມນວນ;

3. ນຳສັດໄປເຂົ້າຄອກພັກ ໂດຍທັນທີ ແລ້ວໃຫ້ສັດໄດ້ພັກຜ່ອນ ແລະ ສືບຕໍ່ໃຫ້ສັດອົດອາຫານ ໃຫ້ຄົບຕາມໄລຍະເວລາທີ່ກຳນົດ, ດຳເນີນການອະນາໄມ, ສີດລ້າງຮ່າງກາຍສັດໃຫ້ສະອາດ. ຖ້າອາກາດຮ້ອນອົບເອົ້າເກີນໄປຕ້ອງພົ່ນລະອອງນ້ຳເຢັນ ຫຼື ເປີດພັດລົມ ເພື່ອປ້ອງກັນບໍ່ໃຫ້ສັດເກີດຄວາມກົດດັນ;

4. ໃນກໍລະນີທີ່ມີຄວາມຈຳເປັນ ຕ້ອງໄດ້ພັກສັດໄວ້ເກີນກຳນົດເວລາທີ່ໃຫ້ສັດອົດອາຫານ ຕ້ອງໃຫ້ສັດໄດ້ກິນອາຫານເພື່ອລໍຖ້າຂ້າ. ອາຫານທີ່ໃຊ້ລ້ຽງສັດ ຕ້ອງແມ່ນອາຫານທີ່ມີຄຸນະພາບດີ, ບໍ່ປົນເປື້ອນດ້ວຍເຊື້ອພະຍາດຕິດຕໍ່, ຢາຕ້ານເຊື້ອ, ສານເລັ່ງຊີ້ນແດງ, ສານທີ່ເປັນພິດ ຫຼື ຢາປາບສັດຕູພືດ. ອາຫານຫຍາບ ຈຳພວກຫຍ້າ, ພືດອາຫານສັດ ຕ້ອງເອົາມາຈາກແຫຼ່ງທີ່ປອດໄພ ຫຼື ເປັນເຂດທີ່ບໍ່ມີປັດໄຈສ່ຽງ ຊຶ່ງຈະມີຜົນກະທົບ ຕໍ່ຄຸນນະພາບຂອງຊີ້ນ ແລະ ສຸຂະພາບຂອງຜູ້ບໍລິໂພກ;

5. ເມື່ອນຳສັດເຂົ້າບ່ອນພັກສັດກ່ອນຂ້າແລ້ວ ບໍ່ອະນຸຍາດໃຫ້ນຳເອົາສັດອອກຈາກເຂດດັ່ງກ່າວ, ເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດຈາກພະນັກງານສັດຕະວະແພດທີ່ໄດ້ຮັບມອບໝາຍເທົ່ານັ້ນ.

**ມາດຕາ 23 ການຂ້າສັດ**

ການຂ້າສັດ ຕ້ອງນຳໃຊ້ວິທີຂ້າສັດ ແບບບໍ່ທໍລະມານ, ຫຼີກລ່ຽງການເຮັດໃຫ້ສັດເກີດຄວາມເຈັບປວດ, ທໍລະມານກ່ອນຕາຍ ແລະ ປະຕິບັດຫຼັກອະນາໄມຄວາມສະອາດ ເພື່ອປ້ອງກັນ ບໍ່ໃຫ້ຊີ້ນ ແລະ ຊາກສັດ ເກີດການປົນເປື້ອນ. ການຂ້າສັດທີ່ດີ ແມ່ນໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ເຮັດໃຫ້ສັດສະລົບດ້ວຍວິທີບໍ່ທໍລະມານ ເປັນຕົ້ນ ຊັອດດ້ວຍໄຟຟ້າ, ຍິງດ້ວຍປືນຂ້າສັດສະເພາະ, ຮົມດ້ວຍອາຍແກັສທີ່ທາງການໄດ້ຮັບຮອງແລ້ວ ຫຼື ຕີຈຸດສະຫຼົບດ້ວຍຄ້ອນປອນ. ຖ້ານຳໃຊ້ວິທີຊັອດດ້ວຍໄຟຟ້າ ກໍຕ້ອງຮັບປະກັນໃຫ້ມີໄຟຟ້າຕະຫຼອດການປະຕິບັດງານ;

2. ຫຼັງຈາກເຮັດໃຫ້ສັດສະຫຼົບແລ້ວ ໃຫ້ທຳການກວດກາການຕອບສະໜອງຂອງສັດ;

3. ເມື່ອສັດບໍ່ມີການຕອບສະໜອງແລ້ວ ຈາກນັ້ນຈຶ່ງໃຫ້ເຈາະເອົາເລືອດອອກຈາກຮ່າງກາຍສັດ ຢູ່ບ່ອນທີ່ໄດ້ກະກຽມໄວ້ສະເພາະ;

4. ເກັບເລືອດສັດທີ່ເຈາະອອກ ໄວ້ໃນພາຊະນະທີ່ສະອາດ ຫຼື ສົ່ງໄປບ່ອນເກັບເລືອດທີ່ເໝາະສົມ.

**ມາດຕາ 24 ການຄືວສັດ**

ການຄືວສັດ ແມ່ນເລີ່ມຈາກ ການເອົາຂົນອອກ ຫຼື ລອກໜັງ, ເອົາເຄື່ອງໃນອອກ, ຜ່າຊາກ, ຜ່າຊີກ, ລວມທັງການລ້າງທຳຄວາມສະອາດເຄື່ອງໃນ ແລະ ຊາກ ຊຶ່ງຂັ້ນຕອນການຄືວສັດ ຕ້ອງປະຕິບັດຕາມວິທີທີ່ຮັບປະກັນຄວາມສະອາດ ແລະ ຖືກຕາມຫຼັກສຸຂານາໄມທີ່ດີ ຕາມທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 25 ການຂໍອະນຸຍາດຂ້າສັດຢູ່ນອກໂຮງຂ້າສັດ**

ການຂ້າສັດຢູ່ນອກໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ອະນຸຍາດໃຫ້ຂ້າໄດ້ໃນກໍລະນີດັ່ງນີ້:

1. ທ້ອງຖິ່ນໃດໜຶ່ງ ທີ່ບໍ່ມີໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຫຼື ຢູ່ເຂດຫ່າງໄກສອກຫຼີກ, ທຸລະກັນດານ, ເສັ້ນທາງຄົມມະນາຄົມບໍ່ສະດວກ ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ສາມາດອະນຸຍາດໃຫ້ຂ້າສັດຢູ່ນອກໂຮງຂ້າສັດໄດ້ ແຕ່ຕ້ອງໄດ້ປະຕິບັດຕາມລະບຽບການ ທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ;

2. ໃນກໍລະນີມີເຫດອັນສົມຄວນເປັນພິເສດ ເປັນຕົ້ນ ສັດດຸຮ້າຍ, ສັດແຫບໍ່ສາມາດຈັບມາຂ້າໃນໂຮງຂ້າສັດໄດ້ ເຈົ້າໜ້າທີ່ຂອງອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ສາມາດອະນຸຍາດໃຫ້ ຂ້າສັດນອກໂຮງຂ້າໄດ້ ແຕ່ເຈົ້າຂອງສັດ ຫຼື ຜູ້ຂ້າສັດ ຕ້ອງໄດ້ລາຍງານໃຫ້ ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນຊາບ;

3. ການຂ້າສັດ ເພື່ອພິສູດທາງດ້ານວິຊາການ.

ຜູ້ທີ່ມີຈຸດປະສົງຂ້າສັດນອກໂຮງຂ້າສັດ ຕາມ ຂໍ້ 1, 2 ແລະ 3 ຕ້ອງໄດ້ມີຄຳຮ້ອງ ແລະ ແຈ້ງເຫດຜົນໃຫ້ແກ່ ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ພິຈາລະນາອະນຸມັດ ຖ້າເປັນບ່ອນທີ່ມີເງື່ອນໄຂຕ້ອງຂ້າສັດ ຕໍ່ເຈົ້າໜ້າທີ່ ທີ່ໄດ້ຮັບມອບໝາຍ.

**ມາດຕາ 26 ການຍົກເວັ້ນການຂໍອະນຸຍາດກ່ອນຂ້າສັດ**

ການຂ້າສັດທີ່ບໍ່ຈຳເປັນຕ້ອງຂໍອະນຸຍາດກ່ອນຂ້າ ມີດັ່ງນີ້:

1. ການຂ້າສັດປີກ, ໝູລາດ, ສັດລ້ຽງເອື້ອງນ້ອຍ ຈຳນວນບໍ່ຫຼາຍ ເພື່ອບໍລິໂພກພາຍໃນຄອບຄົວ;

2. ການຂ້າສັດ ເພື່ອການຄົ້ນຄວ້າ ວິໄຈທາງດ້ານວິຊາການ;

3. ການຂ້າສັດຂອງຕົນເອງ ເພື່ອການຄວບຄຸມພະຍາດລະບາດ ແຕ່ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຊາບພາຍໃນຊາວສີ່ ຊົ່ວໂມງ;

4. ການຂ້າລູກສັດປີກທີ່ມີອາຍຸບໍ່ເກີນເຈັດວັນ;

ການຂ້າສັດ ຕາມຂໍ້ 1 ຫາ ຂໍ້ 4 ເຖິງວ່າບໍ່ໄດ້ຂໍອະນຸຍາດ ແຕ່ຕ້ອງດຳເນີນການຂ້າສັດ ໂດຍວິທີທີ່ບໍ່ທໍລະມານກ່ອນເອົາເລືອດອອກ, ປະຕິບັດຫຼັກການຂ້າສັດທີ່ຖືກຫຼັກສຸຂານາໄມ, ສະອາດ ແລະ ບໍ່ເຮັດໃຫ້ຊີ້ນ ຫຼື ຜະລິດຕະພັນປົນເປື້ອນ. ສິ່ງເສດເຫຼືອຈາກການຂ້າສັດ ແລະ ຄືວ ຕ້ອງເກັບມ້ຽນ, ທຳລາຍໃຫ້ດີ ຫຼີກເວັ້ນບໍ່ໃຫ້ເກີດຜົນກະທົບຕໍ່ສັງຄົມ ແລະ ສະພາບແວດລ້ອມ ພ້ອມທັງຫ້າມບໍ່ໃຫ້ນຳຊີ້ນ ແລະ/ຫຼື ຜະລິດຕະພັນສັດນັ້ນໄປຈຳໜ່າຍໂດຍເດັດຂາດ.

## ໝວດທີ 3
## ການກວດກາອະນາໄມຊີ້ນ

### ມາດຕາ 27 ການກວດກາສຸຂະພາບສັດກ່ອນຂ້າ

ຜູ້ປະກອບກິດຈະການຂ້າສັດ ຕ້ອງໃຫ້ຄວາມຮ່ວມມື ກັບພະນັກງານກວດກາອະນາໄມຊີ້ນ ໃນການກວດກາສຸຂະພາບສັດກ່ອນຂ້າ. ຖ້າຫາກກວດພົບ ເອກະສານບໍ່ຖືກຕ້ອງ ຫຼື ພົບສັດຢູ່ໃນສະພາບທີ່ບໍ່ເໝາະສົມທີ່ຈະນຳໄປຂ້າ, ເຈົ້າຂອງສັດ ແລະ ຜູ້ປະກອບການຕ້ອງປະຕິບັດຕາມມາດຕະການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

ການຕັດສິນຜົນການກວດກາສຸຂະພາບສັດກ່ອນຂ້າ ຂອງພະນັກງານກວດກາອະນາໄມຊີ້ນ ຕ້ອງປະຕິບັດຕາມຫຼັກວິຊາການຢ່າງເຂັ້ມງວດ.

### ມາດຕາ 28 ລັກສະນະຂອງສັດທີ່ເໝາະສົມນຳເຂົ້າຂ້າ

ລັກສະນະຂອງສັດທີ່ເໝາະສົມສຳລັບນຳເຂົ້າຂ້າ ມີດັ່ງນີ້:

1. ຕ້ອງມີສຸຂະພາບແຂງແຮງ, ສົມບູນ;
2. ໄດ້ຜ່ານຂະບວນການພັກສັດ ເພື່ອຫຼຸດຜ່ອນການປົນເປື້ອນຈາກເຊື້ອພະຍາດທີ່ຕິດຕໍ່ທາງດ້ານອາຫານຕາມຄວາມເໝາະສົມ;
3. ໄດ້ຜ່ານການກວດກາສຸຂະພາບສັດກ່ອນຂ້າ ໂດຍພະນັກງານກວດກາອະນາໄມຊີ້ນ ບົນພື້ນຖານການພິຈາລະນາ ຕາມວິທີການດ້ານວິທະຍາສາດ, ການປະເມີນຄວາມສ່ຽງ ແລະ ຂໍ້ມູນຮອບດ້ານຕັ້ງແຕ່ຂອດຜະລິດ, ຂົນສົ່ງຈົນຮອດໂຮງຂ້າ.

### ມາດຕາ 29 ກໍລະນີພົບສັດມີອາການຜິດປົກກະຕິກ່ອນຂ້າ

ໃນການກວດກາສັດກ່ອນຂ້າ ຫາກພົບເຫັນສັດ ມີອາການຜິດປົກກະຕິ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າຂ້າ, ພະນັກງານກວດກາອະນາໄມຊີ້ນ ຕ້ອງກັກສັດໄວ້ໃນສະຖານທີ່ແຍກປ່ຽວ ເພື່ອຊອກຫາສາເຫດ ຫຼື ທຳການປິ່ນປົວ ໃນໄລຍະເວລາໃດໜຶ່ງ ເມື່ອສັດຫາຍດີເປັນປົກກະຕິແລ້ວຈຶ່ງອະນຸຍາດໃຫ້ນຳເຂົ້າຂ້າໄດ້, ຄ່າໃຊ້ຈ່າຍໃນການຕິດຕາມ ແລະ ປິ່ນປົວ ຕ້ອງແມ່ນເຈົ້າຂອງສັດ ເປັນຜູ້ຮັບຜິດຊອບ.

### ມາດຕາ 30 ກໍລະນີພົບສັດຖືພາ ຫຼື ສັດທີ່ສະຫງວນພັນ

ໃນການກວດກາສັດກ່ອນຂ້າ ຫາກພົບສັດ ຖືພາ ຫຼື ສັດທີ່ໄດ້ລົງທະບຽນເປັນສັດສະຫງວນພັນ ທີ່ອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດກຳນົດ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າຂ້າ ໂດຍໃຫ້ພະນັກງານກວດກາອານາໄມຊີ້ນ ຫຼື ພະນັກງານສັດຕະວະແພດ ຕ້ອງປະຕິບັດມາດຕະການຕາມລະບຽບການ ທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ.

### ມາດຕາ 31 ກໍລະນີພົບພະຍາດສັດທີ່ຈຳເປັນຕ້ອງແຈ້ງກ່ອນຂ້າ

ໃນກໍລະນີທີ່ພະນັກງານສັດຕະວະແພດ ຫຼື ພະນັກງານກວດກາອະນາໄມຊີ້ນ ສົງໄສ ຫຼື ກວດພົບສັດທີ່ຈະນຳເຂົ້າຂ້ານັ້ນ ເປັນພະຍາດສັດທີ່ຈຳເປັນຕ້ອງແຈ້ງ ໃຫ້ສັ່ງໂຈະການຂ້າສັດ, ປະຕິບັດມາດຕະການຂ້າທຳລາຍ

ແລະ ຄວບຄຸມພະຍາດ ຕາມກົດໝາຍ ແລະ ລະບຽບການກຳນົດ ໂດຍເຈົ້າຂອງສັດຕ້ອງໄດ້ຮັບຜິດຊອບຄ່າໃຊ້ຈ່າຍດັ່ງກ່າວ.

**ມາດຕາ 32 ສັດທີ່ບໍ່ເໝາະສົມສຳລັບນຳເຂົ້າຂ້າ**

ສັດທີ່ບໍ່ເໝາະສົມ ສຳລັບ ນຳເຂົ້າຂ້າ ເພື່ອການບໍລິໂພກ ແມ່ນສັດທີ່ເປັນພະຍາດ ຫຼື ມີອາການດັ່ງນີ້:

1. ພະຍາດ ວັນນະໂຣກ;
2. ພະຍາດໄຂ້ເລືອດດຳ;
3. ພະຍາດເຕົ້ານົມເລືອດ;
4. ພະຍາດປາກເປື່ອຍລົງເລັບ;
5. ພະຍາດວໍ້;
6. ພະຍາດແທ້ງຕິດຕໍ່;
7. ພະຍາດຜົ້ງດັງອັກເສບຕິດຕໍ່;
8. ພະຍາດບາດທະຍັກ;
9. ພະຍາດໄຂ້ບວມ;
10. ພະຍາດປານແດງໝູ;
11. ໝູທີ່ມີອາການໄຂ້ສູງເກີນ 41 ອົງສາເຊ;
12. ງົວ, ຄວາຍ ທີ່ມີອາການໄຂ້ສູງເກີນ 40,5 ອົງສາເຊ;
13. ສັດມີອາການບວມທັງໂຕ;
14. ສັດຈ່ອຍຜອມ ໜັງຕິດດູກ;
15. ສັດເປັນແຜ ຫຼື ຕຸ່ມຝີ ທົ່ວໂຕ;
16. ສັດຖືພາມານ ຫຼື ສັດຫາກໍ່ເກີດລູກໃໝ່ໆ;
17. ສັດທີ່ຫາກໍ່ຮັບວັກຊີນ ບໍ່ເກີນ 21 ວັນ.

**ມາດຕາ 33 ການກວດກາອະນາໄມຊີ້ນຫຼັງຂ້າ**

ການກວດກາອະນາໄມຊີ້ນຫຼັງຂ້າ ຕ້ອງດຳເນີນໂດຍພະນັກງານກວດກາອະນາໄມຊີ້ນ. ຜູ້ປະຕິບັດງານຢູ່ບ່ອນຂ້າຄົວສັດ ຕ້ອງໃຫ້ຄວາມຮ່ວມມືແກ່ພະນັກງານກວດກາອະນາໄມຊີ້ນ ໃນການກວດກາອະນາໄມຊີ້ນຫຼັງຂ້າ.

ຖ້າຫາກກວດພົບຊາກ ຫຼື ພາກສ່ວນໃດໜຶ່ງຂອງຊາກສັດ ບໍ່ປອດໄພສຳລັບການບໍລິໂພກ ຕ້ອງໄດ້ກັກ ຫຼື ຍຶດຊາກໄວ້ ເພື່ອນຳໄປທຳລາຍຕາມມາດຕະການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດຢ່າງເຂັ້ມງວດ.

ໃນກໍລະນີສົງໃສ ພະນັກງານກວດກາອະນາໄມຊີ້ນ ຕ້ອງເກັບຕົວຢ່າງສົ່ງໄປວິໄຈ ແລະ ກັກຊາກໄວ້ໃນສະຖານທີ່ແຍກໄວ້ສະເພາະ ເພື່ອລໍຖ້າຜົນການວິໄຈເສຍກ່ອນ ໂດຍຊາກ ຫຼື ຜະລິດຕະພັນນັ້ນ ຕ້ອງໄດ້ເຮັດກາ ຫຼື ເຄື່ອງໝາຍເຕືອນພິເສດໃສ່.

**ມາດຕາ 34 ການຢັ້ງຢືນ ຜົນການກວດກາອະນາໄມຊີ້ນ**

ໃນການດຳເນີນການກວດກາສັດຫຼັງຂ້າ ພະນັກງານສັດຕະວະແພດ ຫຼື ພະນັກງານກວດກາອະນາໄມຊີ້ນ ຕ້ອງຢັ້ງຢືນ ຕາມຈັນຍາບັນ ແລະ ຫຼັກວິຊາການຢ່າງເຂັ້ມງວດ. ການຢັ້ງຢືນ ແມ່ນໃຫ້ນຳໃຊ້ກາຈ້ຳໃສ່ຊີ້ນ ຕາມແຕ່ລະກໍລະນີ ໃດໜຶ່ງ ດັ່ງນີ້:

1. ຈ້ຳກາມົນ ໃນກໍລະນີ ຢັ້ງຢືນວ່າ: ຜ່ານ ເໝາະສົມສຳລັບການບໍລິໂພກ;
2. ຈ້ຳກາສາມຫຼ່ຽມໃນກໍລະນີຢັ້ງຢືນວ່າ: ໃຫ້ນຳໄປບຳບັດກ່ອນ ຈຶ່ງບໍລິໂພກໄດ້;
3. ຈ້ຳກາສີ່ຫຼ່ຽມ ໃນກໍລະນີຢັ້ງຢືນວ່າ: ບໍ່ຜ່ານ ບໍ່ເໝາະສົມສຳລັບບໍລິໂພກ.

**ມາດຕາ 35 ກໍລະນີພົບພະຍາດທີ່ຈຳເປັນຕ້ອງແຈ້ງໃນລະຫວ່າງການກວດກາຫຼັງຂ້າ**

ຫາກພົບເຫັນພະຍາດທີ່ຈຳເປັນຕ້ອງແຈ້ງ ໃນລະຫວ່າງການກວດກາຫຼັງຂ້າ ພະນັກງານກວດກາອະນາໄມຊີ້ນ ຫຼື ພະນັກງານສັດຕະວະແພດ ຕ້ອງສັ່ງໃຫ້ຍົກເລີກການຂ້າສັດໂຕຕໍ່ໄປ, ທຳລາຍຊາກສັດນັ້ນທັນທີ ແລະ ຫ້າມບໍ່ໃຫ້ນຳໄປຈຳໜ່າຍໂດຍເດັດຂາດ. ໃຫ້ດຳເນີນການ ປິດໂຮງງານ ເພື່ອອະນາໄມ ແລະ ຂ້າເຊື້ອຕາມລະບຽບການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ. ໂຮງຂ້າສັດຈະຖືກອະນຸຍາດໃຫ້ເປີດໄດ້ອີກກໍຕໍ່ເມື່ອ ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນແລ້ວເທົ່ານັ້ນ. ພະນັກງານກວດກາອະນາໄມຊີ້ນ ແລະ ພະນັກງານສັດຕະວະແພດ ຕ້ອງດຳເນີນການຕິດຕາມຢ່າງໃກ້ສິດ ແລະ ລາຍງານໃຫ້ອົງການຄຸ້ມຄອງຂອງຕົນ ຊາບຢ່າງຕໍ່ເນື່ອງ.

**ມາດຕາ 36 ຊີ້ນສັດທີ່ບໍ່ເໝາະສົມສຳລັບບໍລິໂພກ**

ຊີ້ນສັດທີ່ບໍ່ເໝາະສົມສຳລັບບໍລິໂພກ ມີດັ່ງນີ້:

1. ຊີ້ນສັດຕາຍ ທີ່ບໍ່ຮູ້ສາເຫດ ຫຼື ຕາຍຍ້ອນເປັນພະຍາດລະບາດ;
2. ຊີ້ນສັດທີ່ເປັນພະຍາດ ແລະ ພົບອາການ ຕາມທີ່ກຳນົດຢູ່ໃນມາດຕາ 32 ຂອງດຳລັດສະບັບນີ້;
3. ຊີ້ນຂອງສັດທີ່ເປັນພະຍາດບີຮື່ອທົ່ວຮ່າງກາຍ;
4. ຊີ້ນຂອງສັດທີ່ມີອາການຊຶມເຊື້ອ ຫຼື ເລືອດເປັນພິດ;
5. ຊີ້ນສັດທີ່ມີເມັດສານ ຫຼື ມີແມ່ກາຝາກຝັງຢູ່ທົ່ວໄປ;
6. ຊີ້ນສັດທີ່ມີສີຊ້ຳ ຫຼື ມີເລືອດຂັງ;
7. ຊີ້ນສັດໃນບ່ອນທີ່ເປັນແຜ, ຝີ ຫຼື ຈຸດເນົ່າເປື່ອຍ;
8. ຊີ້ນສັດໃນບໍລິເວນເປັນກ້ອນອັກເສບ ຫຼື ເປັນກະດັນແຂງ;
9. ຊີ້ນສັດທີ່ມີກິ່ນປັດສະວະ ຫຼື ມີກິ່ນຢາ;
10. ຊີ້ນສັດບໍ່ສະອາດ, ບໍ່ສົດ ຫຼື ມີສີດຳເນົ່າເໝັນ.

ຖ້າພົບຊີ້ນສັດທີ່ກ່າວມາຂ້າງເທິງນີ້ ໃຫ້ພະນັກງານກວດກາອະນາໄມຊີ້ນ ສັ່ງທຳລາຍ ຫຼື ຈັດໃຫ້ເປັນຜະລິດຕະພັນສັດສຳຮອງທີ່ບໍ່ເໝາະສົມສຳລັບບໍລິໂພກ ເພື່ອນຳໄປໃຊ້ປະໂຫຍດອື່ນ.

**ມາດຕາ 37 ຜະລິດຕະພັນສັດທີ່ບໍ່ເໝາະສໍາລັບບໍລິໂພກ**

ໃນກໍລະນີທີ່ພະນັກງານກວດກາອະນາໄມຊີ້ນ ຕັດສິນວ່າ ບໍ່ຜ່ານ ບໍ່ເໝາະສົມສໍາລັບການບໍລິໂພກແຕ່ໄດ້ພິຈາລະນາວ່າສາມາດນໍາໄປປຸງແຕ່ງເປັນຜະລິດຕະພັນອື່ນ ກ່ອນນໍາເອົາອອກຈາກໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຕ້ອງໄດ້ຮັບອະນຸຍາດຈາກພະນັກງານກວດກາອະນາໄມຊີ້ນ ແລະ ສັດຕະວະແພດທີ່ໄດ້ຮັບມອບໝາຍເສຍກ່ອນ.

**ມາດຕາ 38 ການທໍາລາຍຊາກສັດທີ່ບໍ່ສາມາດບໍລິໂພກ**

ທຸກຊາກສັດ, ຊີ້ນສ່ວນ ຫຼື ສິ່ງເສດເຫຼືອຕ່າງໆຂອງສັດທີ່ບໍ່ສາມາດບໍລິໂພກໄດ້ ຕ້ອງທໍາລາຍ ແລະ ໃຫ້ຢູ່ພາຍໃຕ້ການຕິດຕາມ ຢ່າງໃກ້ສິດຂອງພະນັກງານສັດຕະວະແພດຂອງລັດ ແລະ ພະນັກງານກວດກາອະນາໄມຊີ້ນ ຢ່າງເຂັ້ມງວດ.

## ໝວດທີ 4
## ການຕັດແຕ່ງຊາກ, ການເກັບຮັກສາ ແລະ ຈໍາໜ່າຍຊີ້ນສົດ ແລະ ຜະລິດຕະພັນສັດ

**ມາດຕາ 39 ການຕັດແຕ່ງຊາກ ແລະ ແຍກຊີ້ນສົດ**

ການຕັດແຕ່ງຊາກ ຫຼື ແຍກຊີ້ນສົດ ຕ້ອງປະຕິບັດຫຼັງຈາກການຫຼຸດອຸນຫະພູມຊາກ ຫຼື ຫຼັງຈາກການຜ່າຊີກແລ້ວ. ຜູ້ຕັດແຕ່ງຕ້ອງມີຄວາມຊໍານານງານ, ໃສ່ເຄື່ອງກັນເປື້ອນ ແລະ ປະຕິບັດຫຼັກການສຸຂານາໄມສ່ວນບຸກຄົນຢ່າງເຄັ່ງຄັດ.

ມີດ, ເຄື່ອງມື ຫຼື ອຸປະກອນທີ່ໃຊ້ໃນການຕັດແຕ່ງຊາກ ຫຼື ແຍກຊີ້ນ ລວມທັງພາຊະນະບັນຈຸ ຫຼື ຫໍ່ຫຸ້ມ ຕ້ອງລ້າງທໍາຄວາມສະອາດ ແລະ ຂ້າເຊື້ອທັງກ່ອນ ແລະ ຫຼັງໃຊ້ງານ.

**ມາດຕາ 40 ການນໍາໃຊ້ຊາກອຸ່ນ**

ໃນກໍລະນີທີ່ ທີ່ບໍ່ຈໍາເປັນຫຼຸດອຸ່ນຫະພູມຊາກກ່ອນການນໍາໄປປຸງແຕ່ງ ຫຼື ນໍາໃຊ້ຊາກອຸ່ນໂດຍກົງ ຕ້ອງນໍາຊາກໄປຕັດແຕ່ງ ໃຫ້ສໍາເລັດ ພາຍໃນ 45-90 ນາທີ. ຖ້າເກີນໄລຍະເວລາດັ່ງກ່າວ ຕ້ອງໄດ້ນໍາໄປເກັບໄວ້ໃນຫ້ອງເຢັນເພື່ອລໍຖ້າຈໍາໜ່າຍ. ຫ້ອງເຢັນ, ມີດ, ເຄື່ອງມື ຫຼື ອຸປະກອນ ທີ່ສໍາພັດກັບຊາກ ຕ້ອງລ້າງທໍາຄວາມສະອາດ ແລະ ຂ້າເຊື້ອທັງກ່ອນ ແລະ ຫຼັງການໃຊ້ງານ.

**ມາດຕາ 41 ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນສັດ**

ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນສັດ ຕ້ອງຮັບປະກັນດ້ານຄວາມສະອາດ ແລະຄວາມປອດໄພຕໍ່ຜູ້ບໍລິໂພກ. ສະຖານທີ່ເກັບຮັກສາ ແລະ ປຸງແຕ່ງ ຕ້ອງປະຕິບັດຕາມມາດຖານເຕັກນິກ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ. ຊາກສັດທີ່ຕ້ອງການຫຼຸດອຸນຫະພູມຊາກກ່ອນຈໍາໜ່າຍ ຕ້ອງເກັບໄວ້ໃນຫ້ອງເຢັນ ທີ່ມີອຸ່ນຫະພູມ 0-4 ອົງສາເຊ ເປັນເວລາ 18-24 ຊົ່ວໂມງ ແລະ ຕ້ອງໃຫ້ຈຸດໃຈກາງຂອງຊາກມີອຸນຫະພູມຢູ່ລະຫວ່າງ 4-7 ອົງສາເຊ.

**ມາດຕາ 42 ການຫຸ້ມຫໍ່ຜະລິດຕະພັນສັດ**

ວັດຖຸທີ່ໃຊ້ສຳລັບການຫຸ້ມຫໍ່ຊີ້ນ ຫຼື ຜະລິດຕະພັນສັດ ຕ້ອງມີການຢັ້ງຢືນຄວາມປອດໄພ. ສະພາບຂອງສິ່ງຫຸ້ມຫໍ່ຕ້ອງໃໝ່, ສະອາດ, ບໍ່ສີກຂາດ ແລະ ເໝາະສົມກັບຮູບແບບຂອງຜະລິດຕະພັນ. ຖ້າເກີດການແຕກ ຫຼື ສີກຂາດຕ້ອງແກ້ໄຂ ຫຼື ປ່ຽນສິ່ງຫຸ້ມຫໍ່ໃໝ່. ກໍລະນີມີການນຳເອົາສິ່ງຫຸ້ມຫໍ່ກັບມາໃຊ້ໃໝ່ ຕ້ອງຮັບປະກັນບໍ່ເຮັດໃຫ້ເກີດການນຳເອົາສິ່ງປົນເປື້ອນ ຈາກຊຸດເກົ່າມາສູ່ຜະລິດຕະພັນຊຸດໃໝ່.

**ມາດຕາ 43 ການຕິດສະຫລາກຜະລິດຕະພັນສັດ**

ຜະລິດຕະພັນສັດທີ່ມີການຫຸ້ມຫໍ່ ຕ້ອງມີສະຫຼາກ ເພື່ອໃຫ້ຮູ້ຊື່ຜູ້ຜະລິດ, ເຄື່ອງໝາຍການຄ້າ, ລະຫັດຂອງຜະລິດຕະພັນ, ນ້ຳໜັກ, ວັນເດືອນປີຂ້າ, ນ້ຳເບີ້ຊຸດການຜະລິດ, ວັນເດືອນປີຜະລິດ ແລະ ວິທີເກັບຮັກສາ, ຖ້າເປັນຜະລິດຕະພັນສັດທີ່ບໍ່ເໝາະສຳລັບການບໍລິໂພກ ຕ້ອງມີກາໝາຍລະບຸໄວ້ໃຫ້ຊັດເຈນ. ຖ້າເປັນຜະລິດຕະພັນຈຳນວນຫຼາຍທີ່ບໍ່ສາມາດຕິດສະຫຼາກໄດ້ ຕ້ອງມີເອກະສານກຳກັບທີ່ມີຂໍ້ມູນດັ່ງກ່າວຢ່າງຄົບຖ້ວນ.

**ມາດຕາ 44 ການຂົນສົ່ງຊີ້ນ**

ການຂົນສົ່ງຊາກ ແລະ ເຄື່ອງໃນ ໄປຈຳໜ່າຍ ຕ້ອງນຳໃຊ້ພາຫະນະຂົນສົ່ງທີ່ອອກແບບເພື່ອການຂົນສົ່ງຊີ້ນສົດ ຫຼື ຜະລິດຕະພັນສັດເປັນການສະເພາະ ໂດຍປ້ອງກັນບໍ່ໃຫ້ຜະລິດຕະພັນສັດ ສຳພັດກັບລົມ, ຝົນ, ແສງແດດ ຫຼື ຝຸ່ນລະອອງ. ຜະລິດຕະພັນ ຕ້ອງບັນຈຸໃສ່ພາຊະນະສະອາດ ແລະ ບໍ່ໃຫ້ວາງຜະລິດຕະພັນສັດສຳພັດກັບພື້ນພາຫະນະໂດຍກົງ. ລົດຂົນສົ່ງຊີ້ນທີ່ມີລະບົບຄວາມເຢັນ ຕ້ອງຄວບຄຸມອຸນຫະພູມບໍ່ໃຫ້ເກີນ ສີ່ ອົງສາເຊ. ບັນດາພາຊະນະ, ອຸປະກອນ ແລະ ພາຫະນະ ສຳລັບການຂົນສົ່ງ ຕ້ອງມີການລ້າງ, ທຳຄວາມສະອາດ ແລະ ຂ້າເຊື້ອທຸກຄັ້ງທັງກ່ອນ ແລະ ຫຼັງການຂົນສົ່ງ.

**ມາດຕາ 45 ການຈຳໜ່າຍຊີ້ນ ຫຼື ຜະລິດຕະພັນສັດ**

ການຈຳໜ່າຍຊີ້ນ ຫຼື ຜະລິດຕະພັນສັດ ຕ້ອງປະຕິບັດຕາມຫຼັກການສຸຂານາໄມ ດັ່ງນີ້:

1. ໂຕະວາງຂາຍຊີ້ນຕ້ອງເຮັດດ້ວຍວັດຖຸທີ່ບໍ່ເຂົ້າໜ້ຽງ, ທຳຄວາມສະອາດໄດ້ງ່າຍ, ຄວາມສູງຂອງໂຕະຈາກໜ້າພື້ນຢ່າງໜ້ອຍໃຫ້ໄດ້ ແປດສິບ ຊັງຕີແມັດ ແລະ ໜ້າກ້ວາງບໍ່ໃຫ້ເກີນ ແປດສິບຫ້າ ຊັງຕີແມັດ ແລະ ໂຕະຕ້ອງໄດ້ທຳຄວາມສະອາດທຸກຄັ້ງ ທັງກ່ອນ ແລະ ພາຍຫຼັງສຳເລັດການວາງຂາຍແລ້ວ;

2. ຊີ້ນ ແລະ ເຄື່ອງໃນ ທີ່ວາງຂາຍຕາມຕະຫຼາດສົດ, ຮ້ານຂາຍຊີ້ນສະເພາະ ຫຼື ບ່ອນຂາຍຊີ້ນຂອງຫ້າງສັບພະສິນຄ້າ ຕ້ອງມີໃບນຳສົ່ງຊີ້ນ ທີ່ອອກໂດຍພະນັກງານກວດກາອະນາໄມຊີ້ນທີ່ຖືກແຕ່ງຕັ້ງໃຫ້ປະຈຳໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;

3. ຊີ້ນ ແລະ ເຄື່ອງໃນ ທີ່ວາງຂາຍຢູ່ຕະຫຼາດ ຕ້ອງຫ້ອຍໄວ້ດ້ວຍຂໍເກາະທີ່ບໍ່ເຂົ້າໜ້ຽງ. ໃນກໍລະນີວາງຂາຍຢູ່ເທິງໂຕະຕ້ອງວາງຊີ້ນ ແລະ ເຄື່ອງໃນບໍ່ໃຫ້ປົນກັນ ແລະ ໃຫ້ນຳໃຊ້ເຄື່ອງມືເພື່ອປ້ອງກັນບໍ່ໃຫ້ແມງວັນ ຫຼື ສັດອື່ນ ທີ່ເປັນພາຫະຂອງພະຍາດ ສາມາດຕອມ ຫຼື ສຳພັດໄດ້;

4. ຊີ້ນ ຫຼື ຜະລິດຕະພັນສັດທີ່ວາງຂາຍຢູ່ຫ້າງສັບພະສິນຄ້າ ຫຼື ຮ້ານຂາຍຊີ້ນ ຕ້ອງມີການຫຸ້ມຫໍ່ຖືກຕາມຫຼັກການສຸຂານາໄມ ແລະ ຕ້ອງຕິດສະຫຼາກທີ່ບົ່ງບອກເຖິງນ້ຳໜັກ, ລາຄາ, ວັນທີ່ຫຸ້ມຫໍ່, ຊະນິດ, ປະເພດ ແລະ ແຫຼ່ງທີ່ມາຂອງຊີ້ນ ຫຼື ຜະລິດຕະພັນສັດ. ກໍລະນີບ່ອນວາງຂາຍຢູ່ໃນຕູ້ແຊ່ແຂງ ຕ້ອງມີອຸນຫະພູມລົບ ຊາວ ອົງສາເຊ ຫຼື ຖ້າເປັນຕູ້ແກ້ວຕ້ອງຮັກສາອຸນຫະພູມລະຫວ່າງ ສູນ ຫາ ສີ່ ອົງສາເຊ;

5. ຜູ້ຂາຍຊີ້ນຕ້ອງເປັນຜູ້ທີ່ມີສຸຂະພາບແຂງແຮງດີ ບໍ່ມີພະຍາດຕິດແປດ, ຮັກສາຄວາມສະອາດ, ໃສ່ຊຸດຂາຍຊີ້ນ, ຕັດເລັບ ແລະ ລ້າງມືທຸກຄັ້ງ ທັງກ່ອນ ແລະ ຫຼັງການສຳພັດກັບຜະລິດຕະພັນສັດ ແລະ ຫຼັງການເຂົ້າຫ້ອງສຸຂາ. ຫ້າມບໍ່ໃຫ້ຜູ້ຂາຍຊີ້ນຂຶ້ນນັ່ງເທິງໂຕະທີ່ວາງຂາຍຊີ້ນ.

### ມາດຕາ 46 ການຈຳໜ່າຍຊີ້ນ ແລະ ຜະລິດຕະພັນສັດ ທີ່ຕາຍຍ້ອນອຸປະຕິເຫດ

ສັດທີ່ຕາຍຍ້ອນອຸປະຕິເຫດ ເປັນຕົ້ນ ລົດຕຳ, ຕົກຮ່ອງ ຫຼື ຕົກຂຸມ, ຟ້າຜ່າ, ຊົນກັນ ຖ້າເຈົ້າຂອງສັດ ມີຈຸດປະສົງ ຈຳໜ່າຍຊີ້ນສັດ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານຊາບ ພ້ອມທັງແຈ້ງໃຫ້ພະນັກງານລ້ຽງສັດ ຫຼື ສັດຕະວະແພດເມືອງ ຫຼື ໜ່ວຍເສດຖະກິດ-ການເງິນບ້ານ ຫຼື ສັດຕະວະແພດບ້ານຂອງບ້ານທີ່ເກີດເຫດ ລົງມາບັນທຶກເພື່ອເປັນຫຼັກຖານເສຍກ່ອນຈຶ່ງຈຳໜ່າຍໄດ້. ຖ້າເປັນສັດເຈັບປ່ວຍ ຫຼື ມີອາການຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 31 ແລະ 32 ຂອງດຳລັດສະບັບນີ້ ເກີດອຸປະຕິເຫດ ແມ່ນບໍ່ອະນຸຍາດໃຫ້ບໍລິໂພກ ແລະ ຈຳໜ່າຍໂດຍເດັດຂາດ.

### ມາດຕາ 47 ການຈັດປະເພດຄຸນນະພາບຊີ້ນສັດ

ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງເປັນເຈົ້າການ ກຳນົດມາດຕະຖານການຈັດປະເພດຄຸນນະພາບຊີ້ນສັດຂອງສັດແຕ່ລະຊະນິດ ໃຫ້ເປັນອັນລະອຽດ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາຄຸນນະພາບ ແລະ ລາຄາຊີ້ນຂອງ ສປປ ລາວ, ໂດຍຕ້ອງໄດ້ກຳນົດປະເພດ, ການຈັດສັນຄຸນນະພາບ, ລະດັບຂອງສານປົນເປື້ອນ, ສານພິດຕົກຄ້າງ, ຢາຕົກຄ້າງ, ສຸຂະລັກສະນະ ລວມທັງການບັນຈຸ, ເກັບຮັກສາ, ສະແດງເຄື່ອງໝາຍ ແລະ ຕິດສະຫຼາກ ແລະ ການຂົນສົ່ງ ໃຫ້ໄດ້ສອດຄ່ອງກັບມາດຕະຖານຂອງສາກົນ.

## ໝວດທີ 5
## ການດຳເນີນທຸລະກິດກ່ຽວກັບການຂ້າສັດ

### ມາດຕາ 48 ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະດຳເນີນທຸລະກິດກ່ຽວກັບການຂ້າສັດ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນເສຍກ່ອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເລືອກສະຖານທີ່ຕັ້ງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ແລະ ຂໍຄຳເຫັນດີຈາກອົງການປົກຄອງທ້ອງຖິ່ນບ່ອນທີ່ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍຕັ້ງຢູ່;

2. ດຳເນີນການສຶກສາຄວາມເປັນໄປໄດ້ ແລະ ຂຽນບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມທີ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນກຳນົດ;

3. ອອກແບບແຜນຜັງການກໍ່ສ້າງ;

4. ປະກອບເອກະສານ ຕາມທີ່ກຳນົດໄວ້ໃນມາດຕາ 50 ຂອງດຳລັດສະບັບນີ້.

### ມາດຕາ 49 ບົດວິພາກເສດຖະກິດ-ເຕັກນິກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຈະສ້າງຕັ້ງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ພາຍຫຼັງທີ່ໄດ້ທຳການສຶກສາສຳຫຼວດຄວາມເປັນໄປໄດ້, ຜົນກະທົບຕໍ່ສັງຄົມ, ສັດ ແລະ ສິ່ງແວດລ້ອມແລ້ວ ຕ້ອງໄດ້ຂຽນ

ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງກຳນົດ. ບົດວິພາກເສດຖະກິດ-ເຕັກນິກ ຕ້ອງຮ່າງຂຶ້ນໂດຍນັກວິຊາການ ຫຼື ຜູ້ຊ່ຽວຊານທີ່ມີຄວາມຮູ້, ຄວາມຊຳນານ ແລະ ມີປະສົບການໃນການອອກແບບການກໍ່ສ້າງ ຫຼື ຜູ້ທີ່ມີຄວາມຮູ້ໃນການຄຸ້ມຄອງບໍລິຫານກິດຈະການປຸງແຕ່ງກະສິກຳມາກ່ອນ. ບົດວິພາກເສດຖະກິດ-ເຕັກນິກ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນດ້ານເຕັກນິກ ຈາກກົມລ້ຽງສັດ ແລະ ການປະມົງ.

### ມາດຕາ 50 ການປະກອບເອກະສານ

ໃນການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ, ຜູ້ຂໍອະນຸຍາດ ຕ້ອງປະກອບເອກະສານຕົ້ນຕໍ ດັ່ງນີ້:

1. ໃບຄຳຮ້ອງ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງກຳນົດ;
2. ສຳເນົາບັດປະຈຳຕົວ ຫຼື ປື້ມສຳມະໂນຄົວ ແລະ ສຳເນົາໜັງສືເດີນທາງ ຖ້າເປັນຄົນຕ່າງປະເທດ;
3. ສຳເນົາໃບທະບຽນວິສາຫະກິດ ຫຼື ສຳເນົາໃບອະນຸຍາດການລົງທຶນ;
4. ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດສະເໜີໂຄງການ;
5. ໃບຢັ້ງຢືນກຳມະສິດ ຫຼື ສັນຍາເຊົ່າ ທີ່ດິນ;
6. ໃບອະນຸຍາດປະກອບອາຊີບຢູ່ ສປປ ລາວ ຖ້າເປັນຄົນຕ່າງປະເທດ;
7. ແບບແຜນຜັງການກໍ່ສ້າງເບື້ອງຕົ້ນ;

### ມາດຕາ 51 ການອະນຸມັດໃຫ້ລົງມືກໍ່ສ້າງ

ເມື່ອອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໄດ້ຮັບເອກະສານ ຕາມມາດຕາ 50 ຂອງດຳລັດສະບັບນີ້ແລ້ວ, ຕ້ອງມອບໃຫ້ຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດຕາມທີ່ລະບຸໄວ້ໃນມາດຕາ 71 ຂອງດຳລັດສະບັບນີ້, ກວດກາເອກະສານ ແລະ ລົງກວດພື້ນທີ່ຕົວຈິງ.

ຖ້າຄະນະກຳມະການ ເຫັນວ່າເອກະສານ ແລະ ເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ແລ້ວ ໃຫ້ສົ່ງສຳນວນເອກະສານ ແລະ ບົດລາຍງານພ້ອມດ້ວຍໃບສະເໜີ ຕໍ່ລັດຖະມົນຕີ, ເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງວຽງຈັນ ອອກໃບອະນຸມັດການລົງມືກໍ່ສ້າງ ໃຫ້ແກ່ຜູ້ຂໍອະນຸຍາດຢ່າງເປັນທາງການ.

ຖ້າຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດ ເຫັນວ່າ ຜູ້ຂໍອະນຸຍາດບໍ່ມີເງື່ອນໄຂຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດຊາບ ພາຍໃນ ສາມ ວັນລັດຖະການ ແລະ ຜູ້ຂໍອະນຸຍາດສາມາດປັບປຸງ ຫຼື ແກ້ໄຂ, ແລ້ວນຳສະເໜີຕໍ່ຄະນະກຳມະການດັ່ງກ່າວໄດ້ອີກ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນ ທີ່ໄດ້ຮັບແຈ້ງການຈາກຄະນະກຳມະການ. ຫາກເກີນເວລາດັ່ງກ່າວ, ຖືວ່າຜູ້ຂໍອະນຸຍາດ ບໍ່ມີຈຸດປະສົງທີ່ຈະສ້າງຕັ້ງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍນັ້ນ.

### ມາດຕາ 52 ການກວດກາຄວາມຄືບໜ້າຂອງການກໍ່ສ້າງ

ການກວດກາ ຄວາມຄືບໜ້າຂອງການກໍ່ສ້າງ ແມ່ນໜ້າທີ່ຂອງຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດໂດຍໃຫ້ປະຕິບັດ ດັ່ງນີ້:

- ຄັ້ງທຳອິດ ໃຫ້ກວດກາ ເມື່ອຜູ້ຂໍອະນຸຍາດໄດ້ດຳເນີນການກໍ່ສ້າງ ສຳເລັດ ສາມສິບສ່ວນຮ້ອຍ;
- ຄັ້ງທີ່ສອງ ໃຫ້ກວດກາ ເມື່ອຜູ້ຂໍອະນຸຍາດໄດ້ດຳເນີນການກໍ່ສ້າງ ສຳເລັດ ຫົກສິບສ່ວນຮ້ອຍ;

- ຄັ້ງສຸດທ້າຍ ໃຫ້ກວດກາ ເມື່ອຜູ້ຂໍອະນຸຍາດໄດ້ດຳເນີນການກໍ່ສ້າງ ສຳເລັດ ຮ້ອຍສ່ວນຮ້ອຍ.

ໃນແຕ່ລະຄັ້ງຂອງການກວດກາ ຄະນະກຳມະການ ຕ້ອງເຮັດບົດລາຍງານ ໃຫ້ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຫຼື ເຈົ້າແຂວງ,ເຈົ້າຄອງນະຄອນຫຼວງວຽງຈັນ ຊາບທຸກຄັ້ງ. ເມື່ອການກໍ່ສ້າງສຳເລັດໂດຍສົມບູນຮ້ອຍເປີເຊັນແລ້ວ ແລະ ໄດ້ຜ່ານການກວດກາຂອງຄະນະກຳມະການຄັ້ງສຸດທ້າຍແລ້ວ ມອບໃຫ້ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງໃຫ້ດຳເນີນທຸລະກິດກ່ຽວກັບການຂ້າສັດເບື້ອງຕົ້ນ ໃຫ້ແກ່ຜູ້ຂໍອະນຸຍາດ.

**ມາດຕາ 53 ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ**

ໂດຍອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໃຫ້ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ສາມາດອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດຖາວອນ ໃຫ້ແກ່ຜູ້ຂໍອະນຸຍາດໄດ້ຕາມແຕ່ລະກໍລະນີ ດັ່ງນີ້:

ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ປະເພດ 1, ປະເພດ 2 ແລະ ໂຮງຂ້າສັດຂະໜາດນ້ອຍຂຶ້ນໄປ ແມ່ນມອບໃຫ້ຫົວໜ້າກົມລ້ຽງສັດ ແລະ ການປະມົງ ເປັນຜູ້ອອກໃບອະນຸຍາດ;

ໃນກໍລະນີ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ປະເພດ 3 ແລະ ປະເພດ 4 ແລະ ບ່ອນຂ້າສັດຍ່ອຍ ແມ່ນມອບໃຫ້ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ອອກໃບອະນຸຍາດ.

**ມາດຕາ 54 ການນຳໃຊ້ໃບອະນຸຍາດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ສາມາດນຳໃຊ້ເປັນເອກະສານສະແດງ ສຳລັບການຈຳໜ່າຍຊາກສັດ ແລະ ຜະລິດຕະພັນສັດທີ່ຕົນເອງຜະລິດ ລວມທັງ ສາມາດນຳໃຊ້ ສຳລັບການນຳເຂົ້າວັດຖຸປະກອນ ເພື່ອນຳມາຂະຫຍາຍການກໍ່ສ້າງ ແລະ ດຳເນີນການຂ້າສັດ ແຕ່ບໍ່ສາມາດນຳໃຊ້ໄດ້ສຳລັບການ ນຳເຂົ້າສັດ, ຜະລິດຕະພັນສັດ ຫຼື ຄ້າຂາຍສັດທີ່ມີຊີວິດໄດ້.

**ມາດຕາ 55 ອາຍຸຂອງໃບອະນຸຍາດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ແມ່ນສາມາດນຳໃຊ້ໄດ້ ຊາວສີ່ເດືອນ ນັບແຕ່ມື້ອອກໃບອະນຸຍາດເປັນຕົ້ນໄປ ແລະ ສາມາດຕໍ່ອາຍຸໄດ້.

ກ່ອນໃບອະນຸຍາດຈະໝົດອາຍຸ ສາມສິບວັນ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸນຳໃຊ້ ນຳອົງການ ທີ່ອອກໃບອະນຸຍາດ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງກຳນົດ. ການພິຈາລະນາ ຕໍ່ໃບອະນຸຍາດ ຕ້ອງພິຈາລະນາບໍ່ໃຫ້ເກີນ ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບໃບສະເໜີ. ໃນໄລຍະທີ່ກຳລັງລໍຖ້າ ການຕໍ່ໃບອະນຸຍາດ, ຜູ້ຮັບໃບອະນຸຍາດສາມາດສືບຕໍ່ດຳເນີນການຂ້າສັດໄດ້ຈົນກ່ວາຈະໄດ້ຮັບການແຈ້ງຕອບຢ່າງເປັນທາງການຈາກອົງການກ່ຽວຂ້ອງ.

**ມາດຕາ 56 ໃບອະນຸຍາດເສຍຫາຍ ຫຼື ຖືກທຳລາຍ**

ໃນກໍລະນີທີ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ເສຍຫາຍ ຫຼື ຖືກທຳລາຍ ຜູ້ທີ່ໄດ້ຮັບໃບອະນຸຍາດ ຕ້ອງແຈ້ງໃຫ້ອົງການທີ່ອອກໃບອະນຸຍາດຊາບໂດຍດ່ວນ ແລະ ຕ້ອງໄດ້ປະກອບເອກະສານຂໍຮັບໃບອະນຸຍາດຄືນໃໝ່ ພາຍໃນ ສິບຫ້າວັນ ນັບແຕ່ມື້ແຈ້ງເສຍຫາຍ. ຜູ້ອອກໃບອະນຸຍາດ ຕ້ອງໄດ້ອອກໃບແຈ້ງເສຍຫາຍໃຫ້ແກ່ຜູ້ຂໍອະນຸຍາດ ແລະ ອອກໃບອະນຸຍາດໃໝ່ບໍ່ເກີນ 30 ວັນ.

**ມາດຕາ 57 ການໂຈະ ຫຼື ຖອນໃບອະນຸຍາດ**

ກໍລະນີ ຜູ້ໄດ້ຮັບອະນຸຍາດບໍ່ປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ ຫຼື ມີການກະທຳຜິດຕໍ່ຂໍ້ກຳນົດຂອງດຳລັດສະບັບນີ້ ຜູ້ອະນຸຍາດ ມີສິດສັ່ງໂຈະໃບອະນຸຍາດ ແລະ ໃຫ້ເວລາແກ່ຜູ້ໄດ້ຮັບອະນຸຍາດ ໄປປັບປຸງແກ້ໄຂ ບໍ່ໃຫ້ເກີນ ສາມສິບວັນ;

ຖ້າພົບຜູ້ໄດ້ຮັບອະນຸຍາດມີການກະທຳຜິດໃນເລື່ອງດຽວກັນອີກ ພາຍໃນໜຶ່ງປີ ຜູ້ອະນຸຍາດ ມີສິດສັ່ງຍົກເລີກ ແລະ ຖອນໃບອະນຸຍາດໄດ້;

ກໍລະນີ ຜູ້ໄດ້ຮັບອະນຸຍາດຕ້ອງການຍົກເລີກກິດຈະການດ້ວຍຄວາມສະໝັກໃຈ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນ ຕໍ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ພາຍໃນ ສາມສິບວັນ ກ່ອນຈະມີການຍົກເລີກກິດຈະການ.

**ມາດຕາ 58 ການຍ້າຍສະຖານທີ່, ການຢຸດເຊົາ, ການໂອນກິດຈະການ**

ຖ້າຜູ້ໄດ້ຮັບອະນຸຍາດ ມີຈຸດປະສົງຈະຍ້າຍສະຖານທີ່ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ລວມທັງການຢຸດເຊົາ ແລະ ໂອນກິດຈະການ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນເສຍກ່ອນ.

**ມາດຕາ 59 ການເກັບຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ**

ອົງການຄຸ້ມຄອງວຽກງານ ລ້ຽງສັດ ແລະ ສັດຕະວະແພດ ຈະເກັບຄ່າທຳນຽມ ເປັນຕົ້ນ ຄ່າອາກອນຂ້າສັດຂອງສັດແຕ່ລະຊະນິດ, ຄ່າທຳນຽມໃບອະນຸຍາດຳເນີນທຸລະກິດກ່ຽວກັບການຂ້າສັດ ແລະ ຄ່າບໍລິການດ້ານວິຊາການ ຕາມລະບຽບ ແລະ ກົດໝາຍ ຂອງ ສປປລາວ ທີ່ກຳນົດ ໂດຍອັດຕາຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການທີ່ຈະເກັບຕ້ອງໄດ້ຈັດພິມ ແລະ ເຜີຍແຜ່ຢູ່ດ່ານກວດກາສັດຕະວະແພດ ແລະ ປະກາດຜ່ານລະບົບອິນເຕີເນັດທາງອອນລາຍ ຫຼື ອື່ນໆ.

ໃຫ້ຍົກເວັ້ນຄ່າທຳນຽມ ອາກອນຂ້າສັດ ສຳລັບ ໝູ, ໄກ່ , ເປັດ ຫຼື ຫ່ານ ເພື່ອການສົ່ງອອກຕ່າງປະເທດ ແລະ ອາກອນການຂ້າສັດ, ຄ່າທຳນຽມໂຮງຂ້າສັດ ແລະ ບ່ອນພັກສັດ ໃຫ້ແກ່ບໍລິສັດທີ່ຂ້າສັດ ເພື່ອການປຸງແຕ່ງຜະລິດຕະພັນສັດສຳເລັດຮູບ.

## ໝວດທີ 6
## ໜ້າທີ່ຂອງພະນັກງານກວດກາອະນາໄມຊີ້ນ, ຜູ້ໄດ້ຮັບອະນຸຍາດ ແລະ ຜູ້ດຳເນີນການຂ້າສັດ

**ມາດຕາ 60 ພະນັກງານກວດກາອະນາໄມຊີ້ນ**

ພະນັກງານກວດກາອະນາໄມຊີ້ນ ແມ່ນ ບຸກຄົນທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດແຕ່ງຕັ້ງໃຫ້ມີສິດ ໃນການກວດສຸຂະພາບຂອງສັດກ່ອນຂ້າ ແລະ ການກວດກາອະນາໄມຊີ້ນຫຼັງຂ້າໂດຍແມ່ນສັດຕະ

ວະແພດ ຫຼື ພະນັກງານວິຊາການລ້ຽງສັດ ທີ່ໄດ້ຜ່ານການຝຶກອົບຮົມວິຊາການກວດກາອານາໄມຊີ້ນ ຊຶ່ງມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ປະຕິບັດຕາມຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຢ່າງເປັນທາງການຂອງຂັ້ນເທິງ ກ່ຽວກັບການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;

2. ປະຕິບັດວຽກງານການກວດກາອະນາໄມຊີ້ນ, ສຸຂານາໄມໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕາມແຜນວຽກປະຈຳເດືອນ, ປະຈຳອາທິດ ແລະ ປະຈຳວັນຂອງຕົນຕາມຫຼັກວິຊາການ;

3. ຝຶກອົບຮົມກ່ຽວກັບຫຼັກການສຸຂານາໄມໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໃຫ້ແກ່ຜູ້ຊ່ວຍກວດກາອະນາໄມຊີ້ນປະຈຳໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ, ພະນັກງານ ແລະ ກຳມະກອນ ໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດ;

4. ກວດກາເອກະສານຂອງສັດທີ່ຈະນຳເຂົ້າມາຂ້າ ເຊັ່ນ: ໃບອະນຸຍາດເຄື່ອນຍ້າຍສັດ, ໃບຢັ້ງຢືນສຸຂະພາບສັດ, ໃບລາຍງານການນຳໃຊ້ຢາສັດຕະວະແພດ, ໃບທະບຽນພິມສັດ ແລະ ໜັງສື ຊື້-ຂາຍ ສັດ;

5. ກວດສະຖານທີ່ກັກຂັງສັດ, ກວດ ແລະ ຢັ້ງຢືນສຸຂະພາບສັດກ່ອນຂ້າ;

6. ກວດກາອະນາໄມຊີ້ນ ຫຼັງຂ້າສັດ, ຈ້ຳກາ ແລະ ຢັ້ງຢືນສຸຂະອານາໄມຜະລິດຕະພັນສັດຫຼັງຂ້າ, ເກັບຮັກສາ ແລະ ອອກໃບນຳສິ່ງຜະລິດຕະພັນສັດເພື່ອນຳໄປຈຳໜ່າຍ;

7. ເກັບຕົວຢ່າງສິ່ງກວດເປັນປົກກະຕິ ຫຼື ໃນກໍລະນີສົງໄສຕິດເຊື້ອພະຍາດ;

8. ຕິດຕາມ, ກວດກາ ການຈຳໜ່າຍຜະລິດຕະພັນສັດຢູ່ທ້ອງຕະຫຼາດ ແລະ ຮ້ານສັບພະສິນຄ້າຕ່າງໆ;

9. ກັກ ຫຼື ຍຶດຊີ້ນ ແລະ ຜະລິດຕະພັນສັດ ທີ່ສົງໃສວ່າຕິດເຊື້ອພະຍາດລະບາດສັດ ຫຼື ບໍ່ໄດ້ຜ່ານການຢັ້ງຢືນຢ່າງຖືກຕ້ອງ ໃນນີ້ລວມທັງຊີ້ນ ຫຼື ຜະລິດຕະພັນສັດທີ່ມີການລັກລອບ ເຄື່ອນຍ້າຍເຂົ້າຕະຫລາດສົດ ຫຼື ການຂາຍຊີ້ນເຄື່ອນທີ່;

10. ຕິດຕາມ ແລະ ປະເມີນ ການອະນາໄມ, ຂ້າເຊື້ອໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;

11. ສັ່ງໂຈະການຂ້າສັດໃນກໍລະນີກວດພົບເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ;

12. ຕິດຕາມ, ກວດກາການທຳລາຍສັດ ຫຼື ຊາກສັດໃນກໍລະນີພົບເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ;

13. ສະເໜີຕໍ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຂັ້ນເທິງຂອງຕົນ ສັ່ງປິດໂຮງຂ້າສັດ ໃນກໍລະນີກວດພົບເຊື້ອພະຍາດລະບາດສັດ ທີ່ຈຳເປັນຕ້ອງແຈ້ງຕາມລະບຽບການ;

14. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ ແລະ ລາຍງານສຸກເສີນໃນກໍລະນີພົບພະຍາດລະບາດຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ.

### ມາດຕາ 61 ໜ້າທີ່ຂອງຜູ້ໄດ້ຮັບອະນຸຍາດ

ພັນທະ ແລະ ຄວາມຮັບຜິດຊອບຂອງຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບການຂ້າສັດມີ ດັ່ງນີ້:

1. ຈັດຫາ ຜູ້ດຳເນີນການ ແລະ ຜູ້ປະຕິບັດການ ເປັນພະນັກງານປະຈຳ ຢູ່ໃນວິສາຫະກິດຂອງຕົນຕາມຈຳນວນ ແລະ ເງື່ອນໄຂ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;

2. ຄຸ້ມຄອງ, ດູແລກິດຈະການຂ້າສັດ ຕາມທີ່ລະບຸໄວ້ໃນໃບອະນຸຍາດ ແລະ ປະຕິບັດລະບຽບການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;

3. ຕິດໃບອະນຸຍາດໄວ້ໃນທີ່ເປີດເຜີຍຢູ່ສະຖານທີ່ດຳເນີນທຸລະກິດຂອງຕົນ ເພື່ອໃຫ້ລູກຄ້າ ຫຼື ສາທາລະນະຊົນເຫັນໄດ້ງ່າຍ;

4. ຕິດຕັ້ງປ້າຍສະຖານທີ່ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍໃນບ່ອນທີ່ເປີດເຜີຍ ແລະ ເປັນໄປຕາມລະບຽບການທີ່ອົງການຄຸ້ມຄອງວຽກງານປາສັດຕະວະແພດ ແລະ ຂະແໜງການທີ່ກ່ຽວຂ້ອງກຳນົດ;

5. ສະແດງສຳເນົາໃບແຕ່ງຕັ້ງຫຼື ໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນຜ່ານການຝຶກອົບຮົມຫຼັກສູດດ້ານວິຊາການທີ່ກ່ຽວຂ້ອງ ຂອງ ພະນັກງານກວດກາອະນາໄມຊີ້ນໄວ້ຢູ່ບ່ອນເປີດເຜີຍ ເຫັນໄດ້ງ່າຍ;

6. ໃຫ້ມີລະບົບຕິດຕາມກ່ຽວກັບການຜະລິດ ແລະ ເກັບຕົວຢ່າງ ຕາມລະບຽບການ ທີ່ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນກຳນົດ;

7. ແຈ້ງຕໍ່ຜູ້ອະນຸຍາດ ເພື່ອຕໍ່ອາຍຸ ຫຼື ອອກໃບອະນຸຍາດຄືນໃໝ່ ໃນກໍລະນີທີ່ໃບອະນຸຍາດເສຍ ຫຼື ຖືກທຳລາຍ;

8. ໃຫ້ການຮ່ວມມືກັບອົງການຈັດຕັ້ງຂອງລັດ ໃນກໍລະນີທີ່ມີການກວດກາຄຸນນະພາບ, ຄວາມປອດໄພມາດຕະຖານໂຮງຂ້າ ແລະ ຜະລິດຕະພັນທີ່ເໝາະສົມ ຫຼື ບໍ່ເໝາະສົມສຳລັບການບໍລິໂພກ;

9. ສະໜອງຂໍ້ມູນການຜະລິດ ນັບທັງອຳນວຍຄວາມສະດວກໃຫ້ແກ່ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ;

10. ເສຍຄ່າທຳນຽມ, ຄ່າບໍລິການດ້ານວິຊາການ ແລະ ພັນທະອື່ນຕາມກົດໝາຍ ແລະ ລະບຽບການ;

11. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 62 ໜ້າທີ່ຂອງຜູ້ປະຕິບັດການຂ້າສັດ**

ພັນທະຂອງຜູ້ດຳເນີນການຂ້າສັດ ມີດັ່ງນີ້:

1. ເກັບຮັກສາ, ມອບຊາກ, ເຄື່ອງໃນ, ໜັງ, ຫົວ ຫຼື ອະໄວຍະວະອື່ນ ໃຫ້ພະນັກງານກວດກາອະນາໄມຊີ້ນ ໄດ້ເຮັດໜ້າທີ່ກວດກາອະນາໄມຊີ້ນໃຫ້ສຳເລັດ ແລ້ວຈຶ່ງໃຫ້ເຄື່ອນຍ້າຍອອກຈາກໂຮງຂ້າ;

2. ເກັບຮັກສາ ແລະ ລາຍງານ ຫຼັກຖານທີ່ພົບພະຍາດ ຫຼື ຂໍ້ບົກຜ່ອງຂອງຊາກສັດ;

3. ແຈ້ງໃຫ້ພະນັກງານສັດຕະວະແພດ ແລະ ພະນັກງານກວດກາອະນາໄມຊີ້ນຊາບກໍລະນີພົບລູກສັດອ່ອນໃນທ້ອງ;

4. ອຳນວຍຄວາມສະດວກ ສຳລັບການເຮັດກາໝາຍ, ການເກັບຮັກສາຊາກໃນກໍລະນີທີ່ມີການລໍຖ້າຜົນການກວດກາຄືນໃໝ່;

5. ທຳລາຍຊິ້ນສ່ວນໃດໜຶ່ງຂອງຊາກ ທີ່ເຫັນວ່າບໍ່ປອດໄພ ຫຼື ບໍ່ເໝາະສົມສຳລັບບໍລິໂພກ;

6. ນຳໃຊ້ບັນດາເຄື່ອງໝາຍຕ່າງໆ ຕາມທີ່ພະນັກງານກວດກາອະນາໄມຊີ້ນກຳນົດ;

7. ສະໜອງຂໍ້ມູນການຜະລິດນັບທັງອຳນວຍຄວາມສະດວກໃຫ້ແກ່ການປະຕິບັດໜ້າທີ່ຂອງພະນັກງານກວດກາອະນາໄມຊີ້ນ ແລະ ສັດຕະວະແພດ;

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 63 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ກັກຂັງ, ບັນທຸກ, ຂົນສົ່ງສັດ ແບບທໍລະມານ ຫຼື ຂັດກັບຫຼັກການສະຫວັດດີການສັດ;
2. ຂ້າສັດ ແບບໂຫດຫ້ຽມທໍລະມານ;
3. ຊື້, ຂາຍ, ຂ້າ-ຄົວ ແລະ ບໍລິໂພກ ສັດ ທີ່ຕາຍຍ້ອນເກີດພະຍາດລະບາດ;
4. ຂ້າ ຫຼື ນຳໃຊ້ຊາກສັດ ໂດຍບໍ່ໄດ້ລາຍງານ ຫຼື ຮັບອະນຸຍາດ;
5. ຫ້າມຈຳໜ່າຍສັດທີ່ຕາຍຍ້ອນພະຍາດ, ກິນຢາເບື່ອ ຫຼື ສານເຄມີທີ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ.

**ມາດຕາ 64 ຂໍ້ຫ້າມສຳລັບຜູ້ປະກອບການ**

ຫ້າມຜູ້ປະກອບການມີພຶດຕິກຳ ດັ່ງນີ້:

1. ດຳເນີນການຂ້າສັດໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳເອົາສັດເຂົ້າ ຫຼື ອອກຈາກບ່ອນພັກສັດກ່ອນຂ້າ, ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ໂດຍບໍ່ໄດ້ຜ່ານການກວດກາຂອງພະນັກງານກວດກາອະນາໄມຊີ້ນ;
3. ຂ້າ, ຄົວ ແລະ ຈຳໜ່າຍ ສັດເຫງົາ, ເຈັບ ຫຼື ຕາຍໂດຍບໍ່ຮູ້ສາເຫດ ຫຼື ສັດທີ່ເປັນພະຍາດລະບາດ;
4. ຂ້າສັດ ທີ່ບໍ່ທັນໝົດໄລຍະຂອງຢາ ຫຼື ສານຕົກຄ້າງ;
5. ຂ້າສັດຖືພາມານ ຫຼື ສັດຢູ່ໃນໄລຍະທີ່ນຳໃຊ້ເປັນແນວພັນ;
6. ຊຸກເຊື່ອງ, ປອມແປງເອກະສານ, ສັບປ່ຽນຫຼັກຖານ ຂອງສັດ ແລະ ຜະລິດຕະພັນສັດ ທີ່ເປັນພະຍາດ ຫຼື ຜິດກົດໝາຍ ເພື່ອຜົນປະໂຫຍດຂອງຕົນ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ບໍລິໂພກ;
7. ຈຳໜ່າຍຊີ້ນ ຫຼື ຜະລິດຕະພັນສັດ ທີ່ບໍ່ຜ່ານການກວດກາອະນາໄມຊີ້ນ ຫຼື ຜະລິດຕະພັນທີ່ບໍ່ເໝາະສົມສຳລັບບໍລິໂພກ;
8. ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານກວດກາອະນາໄມຊີ້ນ;
9. ຂົນສົ່ງສັດ ຫຼື ຜະລິດຕະພັນສັດ ແບບບໍ່ຖືກຕ້ອງຕາມຫຼັກສຸຂານາໄມ;
10. ອະນຸຍາດໃຫ້ຜູ້ທີ່ມີອາການເຈັບປ່ວຍ ຫຼື ເປັນພະຍາດຕິດຕໍ່ ເຂົ້າເຮັດວຽກຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;
11. ນຳໃຊ້ສານທີ່ເປັນອັນຕະລາຍຫຼືສານທີ່ຕ້ອງຫ້າມຕ່າງໆປະສົມລົງໃນຊາກສັດ ແລະ ຜະລິດຕະພັນສັດ;
12. ນຳໃຊ້ພາຊະນະບັນຈຸ ທີ່ເປັນພິດ ຫຼື ບໍ່ເໝາະສົມ ສຳລັບການຫຸ້ມຫໍ່ຊີ້ນສົດ ແລະ ຜະລິດຕະພັນສັດ;
13. ໃຫ້ສິນບົນແກ່ພະນັກງານ;
14. ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ວາຈາທີ່ບໍ່ເໝາະສົມຕໍ່ພະນັກງານ ຫຼື ເຈົ້າໜ້າທີ່;
15. ຂຶ້ນນັ່ງເທິງໂຕະທີ່ວາງຂາຍຊີ້ນ ສຳລັບຜູ້ປະກອບການຂາຍຊີ້ນສັດຢູ່ຕະຫລາດ;
16. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 65 ຂໍ້ຫ້າມສໍາລັບພະນັກງານ ແລະ ພະນັກງານກວດກາອະນາໄມຊີ້ນ**

ຫ້າມພະນັກງານ-ລັດຖະກອນ ແລະ ພະນັກງານກວດກາອະນາໄມຊີ້ນມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ຕໍາແໜ່ງ, ບັງຄັບ, ນາບຂູ່ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;

2. ປະຕິບັດໜ້າທີ່ໂດຍຄວາມປະມາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຂາດຈັນຍາບັນ ຕໍ່ວິຊາຊີບຂອງຕົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;

3. ບິດເບືອນຄວາມຈິງ, ປິດບັງ, ເຊື່ອງອໍາ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທໍາຜິດ;

4. ເປີດເຜີຍຄວາມລັບ ຂອງທາງລັດຖະການ ແລະ ຄວາມລັບຂອງຜູ້ປະກອບການ ໂດຍບໍ່ໄດ້ຮັບອະນຸຍາດ;

5. ກົດໜ່ວງຖ່ວງດຶງເອກະສານ, ປອມແປງເອກະສານ ຫຼື ອອກເອກະສານບໍ່ຖືກຕ້ອງ;

6. ຮັບສິນບົນ, ຮຽກເອົາຄ່າທໍານຽມ, ຄ່າບໍລິການ ແລະ ນໍາໃຊ້ລາຍຮັບວິຊາການທີ່ບໍ່ຖືກຕ້ອງຕາມລະບຽບການ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

**ມາດຕາ 66 ອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ**

ອົງການຄຸ້ມຄອງ ແລະ ກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຊຶ່ງປະກອບດ້ວຍ:

1. ກະຊວງ ກະສິກໍາ ແລະ ປ່າໄມ້;
2. ພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ;
3. ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ ແລະ ນະຄອນ;
4. ຈຸງານກະສິກໍາ ແລະ ປ່າໄມ້ບ້ານ ຂອງໜ່ວຍງານເສດຖະກິດການເງິນບ້ານ;
5. ຄະນະກໍາມະການ ກວດກາ, ຕິດຕາມ ການດໍາເນີນທຸລະກິດກ່ຽວກັບການຂ້າສັດ.

**ມາດຕາ 67 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກະຊວງກະສິກໍາ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ກະຊວງກະສິກໍາ ແລະ ປ່າໄມ້ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ນໍາສະເໜີ ນະໂຍບາຍ, ນິຕິກໍາ ແລະ ແຜນຍຸດທະສາດພັດທະນາຄວາມອາດສາມາດໃນການຄຸ້ມຄອງ, ຕິດຕາມ, ກວດກາ ການຂ້າສັດ ແລະ ກວດກາອະນາໄມຊີ້ນໃຫ້ມີປະສິດທິພາບ;

2. ອອກຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ມາດຕະຖານເຕັກນິກກ່ຽວກັບໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ບ່ອນພັກສັກ່ອນຂ້າ, ການຂົນສົ່ງ, ການຂ້າສັດ, ການກວດກາອະນາໄມຊີ້ນ ລວມທັງສຸຂານາໄມໃນການວາງຈໍາໜ່າຍ;

3. ສ້າງ ແລະ ອອກຄຳແນະນຳ, ຄູ່ມື, ຂັ້ນຕອນປະຕິບັດງານທີ່ດີສຳລັບໂຮງຂ້າສັດ, ຍ່ອນຂ້າສັດຍ່ອຍ, ບ່ອນພັກສັດກ່ອນຂ້າ ລວມທັງສະຖານທີ່ປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;

4. ໂຄສະນາເຜີຍແຜ່, ນະໂຍບາຍ, ລະບຽບການ, ມາດຕະຖານ ແລະ ຄຳແນະນຳ ກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອໃຫ້ຊາວກະສິກອນ, ຜູ້ປະກອບການ ແລະ ສາທາລະນະຊົນຮັບຊາບ;

5. ຊີ້ນຳ, ມອບໝາຍ, ກວດກາ, ຕິດຕາມ, ກວດສອບ ແລະປະເມີນຜົນການຈັດຕັ້ງປະຕິບັດກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງຂະແໜງການສາຍຕັ້ງຂອງຕົນ ໃນຂອບເຂດທົ່ວປະເທດ;

6. ສ້າງ, ບຳລຸງຍົກລະດັບ, ຝຶກອົບຮົມ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ສັດຕະວະແພດ ແລະ ພະນັກງານກວດກາອະນາໄມຊີ້ນປະຈຳຢູ່ໂຮງຂ້າສັດຂະໜາດໃຫຍ່, ຂະໜາດກາງ ແລະ ໂຮງຂ້າສັດເພື່ອການສົ່ງອອກ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

7. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດໂຮງຂ້າສັດຂະໜາດໃຫຍ່, ຂະໜາດກາງ ແລະ ໂຮງຂ້າສັດເພື່ອການສົ່ງອອກ;

8. ກວດກາ, ວິໄຈ ແລະ ອອກໃບຢັ້ງຢືນສຸຂານາໄມ ແລະ ມາດຕະຖານການຜະລິດທີ່ດີໃຫ້ແກ່ບຸກຄົນ ແລະ ຜູ້ປະກອບການ;

9. ປະສານສົມທົບກັບຂະແໜງການອື່ນ ເພື່ອຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍ, ຍຸດທະສາດຄວາມປອດໄພຂອງອາຫານແຫ່ງຊາດ ແລະ ສາກົນ ລວມທັງການ ເຝົ້າລະວັງ, ສືບຄົ້ນ, ປ້ອງກັນ ແລະ ຄວາມຄຸມພະຍາດ, ຄວາມສ່ຽງ ທີ່ເກີດຂຶ້ນຈາກອາຫານ;

10. ສະຫຼຸບລາຍງານກ່ຽວກັບການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນໃຫ້ແກ່ ລັດຖະບານ ຮັບຊາບເປັນແຕ່ລະໄລຍະ;

11. ປະຕິບັດໜ້າທີ່ ຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 68 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດພັດທະນາການຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງລັດຖະບານ ແລະ ກະຊວງກະສິກຳ ແລະປ່າໄມ້ ໃຫ້ເປັນແຜນພັດທະນາການຂ້າສັດ ແລະ ກວດກາອະນາໄມຊີ້ນຂອງແຂວງ ໃຫ້ໄດ້ມາດຕະຖານຄວາມສະອາດ ແລະ ປອດໄພຕໍ່ຜູ້ບໍລິໂພກ;

2. ຄົ້ນຄວ້າ ນຳສະເໜີ ຮ່າງຄຳສັ່ງ, ຂໍ້ຕົກລົງ ແລະຄຳແນະນຳ ກ່ຽວກັບການຄຸ້ມຄອງ ແລະ ກວດກາການຂ້າສັດ ແລະ ກວດກາອະນາໄມຊີ້ນ ຢູ່ພາຍໃນແຂວງຂອງຕົນ ບົນພື້ນຖານ ກົດໝາຍ ແລະ ລະບຽບການ ກຳນົດ;

3. ໂຄສະນາເຜີຍແຜ່ນະໂຍບາຍ, ນິຕິກຳ, ຄູ່ມື, ຂັ້ນຕອນປະຕິບັດງານທີ່ດີສຳລັບໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ບ່ອນພັກສັດກ່ອນຂ້າ, ສະຖານທີ່ປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ລວມທັງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອໃຫ້ສາທາລະນະຊົນ ແລະ ຜູ້ປະກອບການພາຍໃນແຂວງຂອງຕົນ ຮັບຊາບຢ່າງທົ່ວເຖິງ;

4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກ່ຽວກັບການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງຂະແໜງການສາຍຕັ້ງ ຢູ່ພາຍໃນຂອບເຂດແຂວງ ຂອງຕົນ;

5. ນຳສະເໜີ ແຜນກໍ່ສ້າງ, ບຳລຸງຍົກລະດັບ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງເຈົ້າໜ້າທີ່ສັດຕະວະແພດ ແລະ ພະນັກງານກວດກາອະນາໄມຊີ້ນຂອງບ່ອນຂ້າສັດຍ່ອຍ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

6. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ຂອງບ່ອນຂ້າສັດຍ່ອຍ;

7. ເຂົ້າຮ່ວມ ກວດກາ ເພື່ອນຳສະເໜີ ຂັ້ນເທິງ ພິຈາລະນາ ອອກໃບຢັ້ງຢືນມາດຕະຖານການຜະລິດທີ່ດີໃຫ້ແກ່ຜູ້ປະກອບການຂ້າສັດ;

8. ສະຫຼຸບລາຍງານກ່ຽວກັບການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ແກ່ຂັ້ນເທິງຕາມສາຍຕັ້ງ ແລະ ສາຍຂວາງຂອງຕົນຮັບຊາບເປັນແຕ່ລະໄລຍະ;

9. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 69 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ໃນການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ ແລະ ນະຄອນ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດ ບັນດານິຕິກຳ, ນະໂຍບາຍ, ແຜນຍຸດທະສາດພັດທະນາການຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງກະຊວງ ແລະ ພະແນກກະສິກຳ ແລະປ່າໄມ້ ໃຫ້ມີປະສິດທິພາບ;

2. ໂຄສະນາເຜີຍແຜ່ນະໂຍບາຍ, ນິຕິກຳ, ຄູ່ມື, ຂັ້ນຕອນປະຕິບັດງານທີ່ດີສຳລັບໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ, ບ່ອນພັກສັດກ່ອນຂ້າ, ສະຖານທີ່ປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ລວມທັງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອໃຫ້ສາທາລະນະຊົນ ແລະ ຜູ້ປະກອບການພາຍໃນເມືອງຂອງຕົນ ຮັບຊາບຢ່າງທົ່ວເຖິງ;

3. ດຳເນີນການຄຸ້ມຄອງ, ກຳກັບ, ດູແລການຈັດຕັ້ງປະຕິບັດ ວຽກງານກວດກາອະນາໄມຊີ້ນ ຢູ່ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ຢູ່ໃນຂອບເຂດເມືອງຂອງຕົນ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ບໍລິໂພກ;

4. ນຳສະເໜີ ແຜນກໍ່ສ້າງ, ບຳລຸງຍົກລະດັບ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງເຈົ້າໜ້າທີ່ສັດຕະວະແພດ ຫຼື ພະນັກງານກວດກາອະນາໄມຊີ້ນ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

5. ເຂົ້າຮ່ວມ ການກວດກາ ເພື່ອພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ ຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕາມການມອບໝາຍຂອງຂັ້ນເທິງຂອງຕົນ;

6. ເຂົ້າຮ່ວມ ກວດກາ ເພື່ອນຳສະເໜີ ຂັ້ນເທິງ ພິຈາລະນາ ອອກໃບຢັ້ງຢືນມາດຕະຖານການຜະລິດທີ່ດີໃຫ້ແກ່ຜູ້ປະກອບການຂ້າສັດ;

7. ສະຫຼຸບລາຍງານກ່ຽວກັບການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ແກ່ຂັ້ນເທິງຕາມສາຍຕັ້ງ ແລະ ສາຍຂວາງຂອງຕົນຮັບຊາບເປັນແຕ່ລະໄລຍະ;

8. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 70 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຈຸງານກະສິກຳ ແລະ ປ່າໄມ້ບ້ານ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີດັ່ງນີ້:

1. ສະເໜີນາຍບ້ານ ແຕ່ງຕັ້ງ ພະນັກງານບ້ານ ເປັນຜູ້ຮັບຜິດຊອບ ໃນການຄຸ້ມຄອງກວດກາ, ລາຍງານກ່ຽວກັບການຂ້າສັດ ຢູ່ພາຍໃນບ້ານ;

2. ປະສານກັບອົງການປົກຄອງບ້ານ ແລະ ພະນັກງານລ້ຽງສັດ ຫຼື ສັດຕະວະແພດເມືອງ ເພື່ອເຜີຍແຜ່ລະບຽບການກ່ຽວກັບການຄຸ້ມຄອງວຽກງານຂ້າສັດ ແລະ ຄວາມປອດໄພຂອງການບໍລິໂພກຊີ້ນສັດໃຫ້ປະຊາຊົນພາຍໃນບ້ານເຂົ້າໃຈ ແລະ ຈັດຕັ້ງປະຕິບັດ;

3. ບັນທຶກ ແລະ ລາຍງານ ໃນກໍລະນີທີ່ມີການຂ້າສັດນອກໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຢູ່ພາຍໃນບ້ານ ເພື່ອບໍລິໂພກພາຍໃນຄອບຄົວ ຫຼື ບຸນປະເພນີ ເຊັ່ນ: ງານລ້ຽງ, ງານດອງ, ຮີດຄອງ, ລວມທັງ ການກວດກາສັດຕາຍຍ້ອນອຸປະຕິເຫດ ແລະ ອື່ນໆ;

4. ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ແກ່ນາຍບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ.

**ມາດຕາ 71 ຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດ**

ຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດ ແມ່ນຄະນະວິຊາການໜຶ່ງທີ່ບໍ່ປະຈຳການ ທີ່ຖືກແຕ່ງຕັ້ງໂດຍ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊຶ່ງຕ້ອງປະກອບດ້ວຍ ຜູ້ຕາງໜ້າ ຈາກຂະແໜງການລ້ຽງສັດ ແລະ ການປະມົງ, ສາທາລະນະສຸກ, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳ ແລະ ການຄ້າ, ແຜນການ ແລະ ການລົງທຶນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການເງິນ, ຜູ້ຕາງໜ້າຈາກພາກເອກະຊົນ ແລະ ສະມາຄົມ ຫຼື ກຸ່ມຜູ້ຂ້າສັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອເປັນຜູ້ຄົ້ນຄວ້າ, ໃຫ້ຄຳປຶກສາ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຂ້າສັດ ແລະ ກວດກາອະນາໄມຊີ້ນ.

**ມາດຕາ 72 ໜ້າທີ່ ຄວາມຮັບຜິດຊອບ ຂອງຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດ**

ຄະນະກຳມະການ ກວດກາ, ຕິດຕາມ ການດຳເນີນທຸລະກິດກ່ຽວກັບການຂ້າສັດ ມີໜ້າທີ່ ດັ່ງນີ້:

1. ສະເໜີຄຳຄິດເຫັນ ກ່ຽວກັບບັນຫາສຳຄັນຂອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນໃຫ້ແກ່ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ແລະ ເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ;

2. ສະເໜີອົງການຄຸ້ມຄອງ ແລະກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ອອກແຈ້ງການເປັນລາຍລັກອັກສອນ ຕໍ່ຜູ້ທີ່ໄດ້ຮັບອະນຸຍາດໃຫ້ສົ່ງເອກະສານ, ຫຼັກຖານທີ່ກ່ຽວຂ້ອງ ເພື່ອປະກອບເຂົ້າໃນການພິຈາລະນາຂອງຄະນະກຳມະການ;

3. ແຕ່ງຕັ້ງອະນຸກຳມະການ ເພື່ອເປັນກອງເລຂາຊ່ວຍໃນການປະຕິບັດໜ້າທີ່ແຕ່ລະໄລຍະ;

4. ຄົ້ນຄວ້າການອອກແຈ້ງການ, ການວາງມາດຕະຖານການຄວບຄຸມຄຸນນະພາບຊີ້ນ ແລະ ຜະລິດຕະພັນສັດ ແລະ ການອອກປະກາດຕ່າງໆ;

5. ໃຫ້ຄຳປຶກສາ ໃນການພິຈາລະນາການອອກ, ໂຈະ ຫຼື ຍົກເລີກໃບອະນຸຍາດ, ໃບຢັ້ງຢືນຮັບຮອງມາດຕະຖານ ແລະ ການຮ້ອງຟ້ອງຂອງຜູ້ປະກອບການ;

6. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 9
## ການກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

**ມາດຕາ 73 ອົງການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ**

ອົງການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ປະກອບດ້ວຍ:

1. **ກວດກາພາຍໃນ** ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໂດຍແມ່ນກົມລ້ຽງສັດ ແລະ ການປະມົງ, ຂະແໜງລ້ຽງສັດ ແລະ ການປະມົງຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ໜ່ວຍງານລ້ຽງສັດ ແລະ ການປະມົງເມືອງ, ເທບສະບານ ແລະ ນະຄອນ ເປັນເສນາທິການໃຫ້ແກ່ອົງການຄຸ້ມຄອງຂອງຕົນ ຊຶ່ງແມ່ນພະນັກງານສັດຕະວະແພດ ແລະ ພະນັກງານກວດກາອະນາໄມຊີ້ນ ເປັນຜູ້ຈັດຕັ້ງປະຕິບັດ;

2. **ກວດກາພາຍນອກ** ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 74 ສິດ ແລະ ໜ້າທີ່ ຂອງອົງການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ**

ອົງການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ມີສິດ ແລະ ໜ້າທີ່ ແລະ ຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;

2. ກວດກາການປະຕິບັດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;

3. ກວດກາກິດຈະການ ລວມທັງການດໍາເນີນທຸລະກິດຂອງຜູ້ປະກອບການຂ້າສັດ ເປັນຕົ້ນ ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ ລວມທັງບ່ອນບໍລິການປີ້ງ ແລະ ປິ່ນສັດຕ່າງໆ;

4. ກວດກາເອກະສານການຢັ້ງຢືນກວດກາອະນາໄມຊີ້ນ ລວມທັງ ເກັບຕົວຢ່າງ ເພື່ອກວດສອບຢັ້ງຢືນຄືນຕາມລະບຽບການ;

5. ເກັບກໍາຂໍ້ມູນ ເພື່ອດໍາເນີນ ການສືບສວນ-ສອບສວນຄະດີ ກ່ຽວກັບການຂ້າສັດ ແລະ ກວດກາອະນາໄມຊີ້ນ;

6. ແຕ່ງຕັ້ງພະນັກງານຂອງຕົນ ເພື່ອຕິດຕາມ, ກວດກາ, ເກັບກໍາຂໍ້ມູນ ລວມທັງນໍາພາໃນການສະກັດກັ້ນການຂ້າ ແລະ ຈໍາໜ່າຍຜະລິດຕະພັນສັດໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະລະບຽບການ;

7. ນໍາໃຊ້ມາດຕະການທີ່ຈໍາເປັນຕໍ່ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຂ້າສັດ ແລະ ປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ;

8. ພົວພັນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

9. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານກວດກາແຕ່ລະໄລຍະໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ.

**ມາດຕາ 75 ຮູບການກວດກາ**

ຮູບການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ປະຕິບັດຕາມສາມຮູບການ ເຊັ່ນ: ການກວດກາຕາມລະບົບປົກກະຕິ, ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ການກວດກາແບບສຸກເສີນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາ ຕາມພາລະບົດບາດ ແລະ ໜ້າທີ່ ຂອງພະນັກງານກວດກາ ເພື່ອກວດກາການປະຕິບັດງານຂອງພະນັກງານສັດຕະວະແພດ ແລະ ພະນັກງານກວດກາອະນາໄມຊີ້ນທີ່ໄດ້ຮັບມອບໝາຍ ນັບທັງອົງການຈັດຕັ້ງຕ່າງໆ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຢູ່ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ຊຶ່ງຕ້ອງດຳເນີນເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາຕາມແຜນກທີ່ໄດ້ກຳນົດໄວ້ແຕ່ລະໄລຍະ.

ການກວດກາແບບສຸກເສີນ ແມ່ນການກວດກາສະເພາະກິດກຽ່ວກັບບັນຫາໃດໜຶ່ງ ຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 10
## ເຄື່ອງແບບ, ເຄື່ອງໝາຍ ແລະ ກາຈ້ຳຊີ້ນ

**ມາດຕາ 76 ເຄື່ອງແບບ ແລະ ເຄື່ອງໝາຍ ຂອງພະນັກງານກວດກາອະນາໄມຊີ້ນ**

ພະນັກງານກວດກາອະນາໄມຊີ້ນມີ ເຄື່ອງແບບ ແລະ ເຄື່ອງໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ກຳນົດ.

**ມາດຕາ 77 ກາຈ້ຳຊີ້ນ**

ກາຈ້ຳຊີ້ນ ມີຊະນິດ, ຂະໜາດ ແລະ ເຄື່ອງໝາຍ ຕາມທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ ເພື່ອນຳໃຊ້ເຂົ້າໃນການຢັ້ງຢືນສຸຂານາໄມຊີ້ນ ແລະ ຜະລິດຕະພັນສັດ.

ກາຈ້ຳຊີ້ນ ຕ້ອງໄດ້ຮັບອະນຸຍາດນຳໃຊ້ຈາກອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນຂັ້ນສູນກາງ ແລະ ປະກອບໃຫ້ ສະເພາະພະນັກງານກວດກາອະນາໄມຊີ້ນ ທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ.

ກາຈ້ຳ ຫຼື ເຄື່ອງໝາຍທີ່ໃຊ້ເປັນທາງການຕ້ອງມີຮູບແບບ ແລະ ຂະໜາດ ທີ່ເປັນເອກະພາບຄືກັນໃນຂອບເຂດທົ່ວປະເທດ, ກາຈ້ຳຊີ້ນເພື່ອຈຸດປະສົງ ສົ່ງອອກ ຕ້ອງໃຫ້ມີຮູບແບບ ແລະ ສີທີ່ແຕກຕ່າງຈາກການທີ່ນຳໃຊ້ຢູ່ພາຍໃນ. ນ້ຳເມິກທີ່ໃຊ້ກໍຕ້ອງປອດໄພ ບໍ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ.

ນ້ຳເມິກທີ່ນຳໃຊ້ເພື່ອຈ້ຳຊີ້ນນັ້ນ ຕ້ອງແມ່ນນ້ຳເມິກສະເພາະ ທີ່ບໍ່ມີຜົນສະທ້ອນ ຕໍ່ຄຸນນະພາບຂອງຊີ້ນ, ບໍ່ມີກິ່ນ ແລະ ຕ້ອງບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ.

ການນຳໃຊ້ກາຈ້ຳຊີ້ນຕ້ອງດຳເນີນໂດຍພະນັກງານກວດກາອະນາໄມຊີ້ນ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້ເທົ່ານັ້ນ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 78 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຮັບຜິດຊອບວຽກງານຄຸ້ມຄອງ ແລະ ກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ເປັນຕົ້ນການດຳເນີນທຸລະກິດກ່ຽວກັບການຂ້າສັດ ທີ່ໄດ້ຕາມມາດຕະຖານເຕັກນິກ, ມີຄຸນນະພາບ ແລະ ຄວາມປອດໄພດີ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

### ມາດຕາ 79 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຕໍ່ບົດບັນຍັດໃດໜຶ່ງຂອງດຳລັດສະບັບນີ້ ເປັນຕົ້ນຂໍ້ຫ້າມ ຈະຖືກ ຈະຖືກສຶກສາອົບຮົມ, ລົງວິໄນ, ຖືກປັບໃໝ ຫຼື ຖືກລົງໂທດທາງອາຍາຕາມແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 80 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບ, ຫຼັກການ ດຳລັດສະບັບນີ້ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### ມາດຕາ 81 ມາດຕະການທາງວິໄນ

ພະນັກງານ, ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ໄດ້ລະເມີດລະບຽບ, ຫຼັກການ ແລະ ຂໍ້ຫ້າມ ທີ່ກຳນົດຢູ່ໃນດຳລັດສະບັບນີ້ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທຳຜິດ, ຫຼົບຫຼີກຈາກການກະທຳຜິດຂອງຕົນ ຈະຖືກລົງວິໄນຕາມລະບຽບການ ເຊັ່ນ: ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ ຫຼື ໃຫ້ອອກຈາກລັດຖະກອນ.

### ມາດຕາ 82 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດລະບຽບ, ຫຼັກການ ແລະ ຂໍ້ຫ້າມທີ່ກຳນົດຢູ່ໃນດຳລັດສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ຂ້າສັດ ແລະ ຈຳໜ່າຍແຈກຢາຍຜະລິດຕະພັນສັດ ທີ່ບໍ່ໄດ້ມາດຕະຖານ, ບໍ່ເໝາະສົມສຳລັບການບໍລິໂພກ ຈະຖືກປັບໃໝ ຕາມທີ່ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 83 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ແລະ ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 84 ມາດຕະການທາງອາຍາ**

ບຸກຄົນທີ່ໄດ້ລະເມີດ ດຳລັດ ສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ກໍ່ຈະຖືກລົງໂທດ ຕາມກົດໝາຍອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 85 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 86 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**